**<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>**

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1-3
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 4-7
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4-7
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 8-10, Easter Lesson
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 8-10, Easter Lesson
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# <u>ຄຳແນະນຳສຳລັບຄຣູສອນ</u>

## <u>ບົດຮຽນທີ 1</u>

## <u>ລູກໜີ້ສອງຄົນ: ສະແດງຄວາມຮູ້ບຸນຄຸນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ລູກາ 7:36-50

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ລູກາ 7:36-50

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຜູ້ຄົນຮັບໃຊ້ແລະຮັກພຣະເຈົ້າ ກໍແມ່ນເພື່ອຢາກລະນຶກເຖິງພຣະຄຸນອັນຍິ່ງໃຫຍ່ໃນການໃຫ້ອະພັຍໂທດ ແລະກໍໄດ້ຮັບການຊົງໄຖ່ນັ້ນ.

**<u>ຄຳຖາມເພື່ອສຳຣວດ:</u>** ທ່ານມີສິ່ງໃດທີ່ຈະລະລຶກເຖິງພຣະຄຸນຂອງພຣະອົງທີ່ໄດ້ໃຫ້ອະພັຍໂທດແກ່ເຮົາ? ແລະທ່ານຈະສະແດງອອກຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຈະສອນໃຫ້ພວກເຮົາຮູ້ວ່າ ຄຸນຄ່າທີ່ພວກເຮົາຄວນສະແດງອອກໃນການຮູ້ບຸນຄຸນຂອງການໃຫ້ອະພັຍນັ້ນຄືແນວໃດ ແລະຈະເຮັດຢ່າງໃດ?

## <u>ແຜນການສິດສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u>

1. ນຳພາໃຫ້ນັກຮຽນໃຫ້ເຂົ້າໃຈເຖິງຄຳອຸປມາຂອງພຣະເຢຊູ ເພາະຄຳອຸປມາແມ່ນການປຽບທຽບແຜ່ນດິນໂລກ ແລະແຜ່ນດິນສວັນຂອງພຣະເຈົ້າ. ໃນພຣະທັມລູການີ້ ມີຄຳອຸປມາຫລາຍເຣື່ອງທີ່ອົງພຣະເຢຊູໄດ້ຍົກມາເປັນອຸທາຫອນສອນໃຈພວກເຮົາ. ເຕືອນໃຫ້ນັກຮຽນເຂົ້າໃນວ່າ ໃນອາທິດຕໍ່ໆໄປນີ້ ສ່ວນຫລາຍພວກເຮົາຈະໄດ້ສຶກສາກ່ຽວກັບຄຳອຸປມານັ້ນ.

2. ເທິງກະດານໃຫ້ຄຣູຂຽນຄຳວ່າ : " ການກະທຳ " ອະທິບາຍການກະທຳຮ່ວມກັບນັກຮຽນ ເມື່ອເຫັນວ່າເຂົ້າໃຈດີແລ້ວໃຫ້ເອົາຫົວຂໍ້ບົດຮຽນຈາກເຈັ້ຽບົດຮຽນອອກມາ "ໃຫ້ເພື່ອຈະໄດ້ຄືນ" ແລະ " ໄດ້ມາເພື່ອຖວາຍ"

### <u>ນຳພາສຶກສາພຣະຄັມພີ</u>

3. ລຶບອັນຂຽນໄວ້ກ່ອນນັ້ນອອກ ແລ້ວຂຽນຊື່ຊີໂມນລົງໄປໃສ່ດ້ານຊ້າຍມື. ແລະຂຽນຄຳວ່າຜູ້ຍິງໄວ້ດ້ານຂວາມື. ອ່ານພຣະຄັມພີໃຫ້ດັງໆ ແລ້ວຂຽນໃສ່ກ້ອງຊີໂມນວ່າ:

| ຊີໂມນ | ຜູ້ຍິງ |
|---|---|
| ເປັນຫຍັງລາວຈຶ່ງເຊີນພຣະເຢຊູໄປກິນເຂົ້າໃນເຮືອນຂອງລາວ? | ເປັນຫຍັງຜູ້ຍິງຄົນນີ້ຈຶ່ງມາໂດຍບໍ່ໄດ້ຖືກເຊີນ? |
| ໃນການຮັບຕ້ອນລາວເຮັດຫຍັງແດ່? ສິ່ງໃດທີ່ລາວບໍ່ໄດ້ເຮັດ? | ເປັນຫຍັງນາງຈຶ່ງຫົດສົງພຣະເຢຊູແລ້ວເຊັດພຣະອົງ |
| ລາວມີປະຕິກິຣິຍາຢ່າງໃດເມື່ອພຣະເຢຊູສະແດງຄຳອຸປມາແລ້ວ? | ນາງມີປະຕິກິຣິຍາຢ່າງໃດ ເມື່ອພຣະເຢຊູສະແດງຄຳອຸປມາແລ້ວ? |
| ລາວໄດ້ຮັບຫຍັງຈາກການກະທຳຢ່າງນັ້ນ? | ນາງໄດ້ຮັບຫຍັງແດ່ຈາກການກະທຳນັ້ນ? |

4. ແບ່ງຫ້ອງຮຽນອອກເປັນສອງສ່ວນ. ສ່ວນນຶ່ງໃຫ້ສັງເກດການກະທຳຂອງຊີໂມນ ແລະອີກສ່ວນນຶ່ງໃຫ້ສັງເກດການກະທຳຂອງຜູ້ຍິງ. ໃນຂະນະທີ່ອ່ານພຣະຄັມພີ ລູກາ 7:36-50. ຫລັງຈາກອ່ານແລ້ວໃຫ້ຟັງຄຳຕອບ ແລ້ວຂຽນລົງກະດານ.

5. ໃຫ້ອ່ານພຣະຄັມພີ ລູກາ 7:41-43
ຄຣູຈະອະທິບາຍຫຍໍ້ໆ

<u>ນຳໃຊ້ໃນຊີວິດປະຈຳວັນ</u>

**ການໄດ້ຮັບອະພັຍໂທດຈາກພຣະເຈົ້າເປັນສິ່ງປະເສີດຫລາຍ.**

ກ. ພຣະເຈົ້າອະພັຍໂທດໂດຍທີ່ເຮົາບໍ່ສົມຄວນໄດ້ຮັບ
ຂ. ພຣະເຈົ້າອະພັຍໂທດໂດຍບໍ່ມີຂອບເຂດ
ຄ. ພຣະເຈົ້າອະພັຍໂທດ ເພາະຄວາມຮັກ, ບໍ່ແມ່ນຍ້ອນການກະທຳດີຂອງເຮົາເອງ
ງ. ພຣະເຈົ້າອະພັຍໂທດໃຫ້ຜູ້ທີ່ເຊື່ອໃນພຣະອົງ ແລະໄດ້ຂໍການອະພັຍຈາກພຣະອົງ.
ຈ. ________________________________________________
ສ. ________________________________________________

**ການສະແດງການຮູ້ບຸນຄຸນທີ່ໄດ້ຮັບອະພັຍໂທດ.**

ກ. ຕ້ອງນະມັສການພຣະເຈົ້າເປັນປະຈຳ ແລະດ້ວຍຈິດວິນຍານທີ່ແທ້ຈິງ
ຂ. ຕ້ອງຖວາຍດ້ວຍຄວາມເຕັມໃຈ ແລະຖວາຍ ນຶ່ງສ່ວນສິບດ້ວຍ.
ຄ. ຕ້ອງຮັບໃຊ້ດ້ວຍຄວາມຮັກ ແລະການກະທຳຕ້ອງສມ່ຳສເມີ
ງ. ຕ້ອງອະພັຍໂທດໃຫ້ຜູ້ອື່ນເຫມືອນດັ່ງອົງພຣະເຢຊູໄດ້ຊົງອະພັຍໂທດໃຫ້ແກ່ທ່ານນັ້ນ.
ຈ. ຕ້ອງອະທິຖານອ້ອນວອນ ເປັນປະຈຳ
ສ. ຂອບພຣະຄຸນໃນການໃຫ້ອະພັຍນັ້ນ
ຊ. ____________________________________
ຍ. ____________________________________

6. ຖາມນັກຮຽນ ເຖິງແນວຄິດທີ່ຜ່ານມາວ່າເປັນຢ່າງໃດ, ຂໍໃຫ້ຄຳຄິດຄຳເຫັນ.
ຂໍໃຫ້ນັກຮຽນສະແດງຄວາມຮູ້ບຸນຄຸນ ສອງຫລືສາມຢ່າງ ຕໍ່ພຣະເຢຊູທີ່ພຣະອົງໄດ້ໃຫ້ອະພັຍແກ່ເຮົາ.

7. ເຊື້ອເຊີນໃຫ້ຕອບຄຳຖາມໃນເຈັ້ຽບົດຮຽນ ແລ້ວອະທິຖານປິດ ຕຽມນະມັສການພຣະເຈົ້າຮ່ວມກັນ.

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 2
## ຈົ່ງອອກໄປກະທຳດ້ວຍຄວາມຮັກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 10: 25-37

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 10:25-37

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ທີ່ມີຄວາມເຊື່ອຢ່າງແທ້ຈິງ ຈະນຳຄົນມາເຖິງພຣະເຈົ້າໄດ້ດ້ວຍຄວາມຮັກຄວາມ ຫ່ວງໃຍ ໃນຄວາມຕ້ອງການຂອງຄົນອື່ນ.

**ຄຳຖາມເພື່ອສຳຣວດ:** ແມ່ນໃຜຄືເພື່ອນບ້ານຂອງທ່ານ, ທ່ານກອມລອມໄປເຖິງໃສ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະຊັ່ງຊາຕີລາຄາວ່າ ການເປັນຊາວຊະມາເຣັຽຜູ້ໃຈດີຂອງຂ້ອຍ ເປັນແວ່ນແຍງ ທີ່ດີ ໃນຊີວິດຂອງຂ້ອຍບໍ່?

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ວາງຄຳຖາມໃຫ້ທຸກຄົນໃນຫ້ອງຮຽນຕອບ: ທ່ານຈະມີຄວາມຮູ້ສຶກຢ່າງໃດ ຫາກມີຄົນນຶ່ງທີ່ທ່ານບໍ່ຮູ້ຈັກເຂົາ ແຕ່ເຂົາຜູ້ນັ້ນຊ່ວຍເຫລືອທ່ານໃນເວລາຂັດສົນແລະຈຳເປັນ?
   ຫລັງຈາກສອງຫລືສາມຄົນຕອບໄປແລ້ວ ຄຣູຈະບອກໃຫ້ນັກຮຽນຮູ້ວ່າມື້ນີ້ພວກເຮົາຈະມາຮຽນພຣະຄັມພີນຳກັນ ກ່ຽວກັບເຣື່ອງຄົນທີ່ບໍ່ຮູ້ຈັກກັນ ແຕ່ໃຫ້ການຊ່ວຍເຫລືອຢ່າງພໍໃຈ.

### ນຳພາສຶກສາພຣະຄັມພີ

2. ໃຫ້ນັກຮຽນສອງຄົນອ່ານພຣະຄັມພີ ລູກາ 10:25-37 ໃຫ້ອ່ານແບບສົນທະນາກັນ. ໃຫ້ຫລີກເວັ້ນຄຳວ່າ: ລາວກ່າວວ່າ, ລາວຕອບວ່າ ດັ່ງນີ້ເປັນຕົ້ນ. ຈະເປັນການສະດວກຫລາຍຫາກຄຣູຈະຂຽນເປັນບົດສົນທະນາ ແລ້ວໃຫ້ນັກຮຽນອ່ານໂລດ.

3. ບອກໃຫ້ນັກຮຽນ ໃຫ້ຄວາມຫມາຍເບິ່ງດູວ່າໃນຄຳເວົ້າຂອງຫົວຫນ້າສາສນາທີ່ຖາມພຣະເຢຊູວ່າ: ຂ້ານ້ອຍຈະເຮັດຢ່າງໃດເພື່ອຈະໄດ້ຊີວິດອັນຕລອດໄປເປັນນິດ.. ນຳພານັກຮຽນຕີຄວາມຫມາຍຂອງຄວາມເວົ້ານັ້ນ ແລະຊັ່ງຊາຕີລາຄາເບິ່ງວ່າເປັນຢ່າງໃດ?

   ໃນເຈັ້ຽບົດຮຽນກ່າວວ່າ: ຄົນລາວ, ຄົນໄທ, ຄົນອະເມຣິກັນ ເຂົ້າໃຈວ່າ ເຮົາດຳເນີນຊີວິດດ້ວຍການກະທຳດີ, ເຊື່ອໃນພຣະເຈົ້າ, ໄປໂບດ, ກໍແມ່ນໄດ້ໄປສວັນໂລດ. ພວກເຮົາເຂົ້າໃຈຜິດແລ້ວ.
   ເປັນຫຍັງພວກເຮົາຈຶ່ງຄວນນັບຖືພຣະບັນຍັດທີ່ຍິ່ງໃຫຍ່ ສອງຂໍ້ໃນ ຂໍ້ທີ 27. ໃຫ້ນັກຮຽນຄົນນຶ່ງອ່ານດັງໆ.

4.. ອີກເທື່ອນຶ່ງໃຫ້ນັກຮຽນ 5 ຄົນ ອອກມາອ່ານຕາມຄຳນີ້: (ຄຣູອາດຈະພິມກ່າຍຄຳເວົ້ານີ້ ແລ້ວຢາຍໃຫ້ຄົນທີ່ຈະເວົ້ານັ້ນ)

ໂຈນ: ຫລາຍຄົນເດີນທາງຕາມເສັ້ນທາງນີ້ ງ່າຍຫລາຍທີ່ຈະປຸ້ນ. ທີມຂອງພວກເຮົາຈະປະທະ ແລະປຸ້ນເອົາເຄື່ອງນຸ່ງຂອງຖື. ພວກເຮົາບໍ່ພະຍາຍາມຂ້າພວກເຂົາ ແຕ່ພວກເຮົາເຮັດທຸກຢ່າງເພື່ອບໍ່ໃຫ້ເຂົາຕໍ່ສູ້ພວກເຮົາຄືນ. ພວກເຮົາຈະປຸ້ນສ່ວນຫລາຍແມ່ນພວກທີ່ຮັ່ງມີແດ່.

ປະໂລຫິດ: ຂ້ອຍເຫັນຄົນໆນຶ່ງນອນຢູ່ຂີ້ດິນ, ຂ້ອຍຄິດວ່າເຂົາຕາຍແລ້ວ, ຂ້ອຍແຕະຕ້ອງຄົນຕາຍບໍ່ໄດ້ເດັດຂາດເພາະຂ້ອຍຕ້ອງໄປທຳພິທີສາສນາທີ່ເຢຣູຊາເລັມ. ທ່ານຮູ້ບໍ່ວ່າຖ້າແຕະຕ້ອງຄົນຕາຍຕ້ອງມີມົນທິນ.

ຄົນເລວີ: ມື້ນັ້ນຂ້ອຍຫຍຸ້ງຍາກຫລາຍແທ້ໆ, ຂ້ອຍບໍ່ມີເວລາທີ່ຈະຊ່ວຍແທ້ໃດ່. ຂ້ອຍຊ້ຳພັດມີນັດອີກດ້ວຍ. ຂ້ອຍເຫັນຢູ່ ແຕ່ຖ້າຂ້ອຍຫາກຢຸດຊ່ວຍເຫລືອຂ້ອຍກໍເສັຽນັດແລະເສັຽທຸກຢ່າງ. ວຽກຂອງຂ້ອຍກໍຈະບໍ່ສຳເຣັດ.

ຄົນຊະມາເຣັຽ: ຄົນນີ້ລາວເຈັບ, ເຮົາຈະຜ່ານກາຍໄປບໍ່ໄດ້. ເຮົາຕ້ອງເບິ່ງລາວກ່ອນ ແລະ ກໍຈີກເຄື່ອງຂອງເຮົານີ້ລະຮຳບາດແຜຂອງລາວເສັຽກ່ອນ. ແລ້ວກໍເອົາລາວຂຶ້ນຂີ່ສັດຂອງຂ້ອຍໄປສົ່ງລາວທີ່ໂຮງແຮມ ຈ່າຍເງິນແລ້ວກໍບອກອີກວ່າ ຖ້າຫາກຣາຄາເກີນກວ່າເງິນນີ້ ເຮົາຈະກັບມາຈ່າຍໃຫ້ທ່ານອີກ.

ຊາຍຖືກປຸ້ນ: ຖ້າບໍ່ມີຊາວຊາມາເຣັຽຄົນນີ້, ຂ້ອຍເອງກໍຄົງຈະຕາຍຢູ່ທີ່ນັ້ນແລ້ວ ບໍ່ໄດ້ມານັ່ງຢູ່ທີ່ນີ້ດອກ. ລາວມີຄວາມເມດຕາຕໍ່ຂ້ອຍຫລາຍ, ລາວພັນບາດແຜຂອງຂ້ອຍ, ນຳຂ້ອຍໄປພັກທີ່ໂຮງແຮມ. ຂ້ອຍແປກໃຈຢ່າງດຽວ ຄືລາວບໍ່ຖາມເອົາຫຍັງນຳຂ້ອຍເລີຍ.

ໝາຍເຫດ: ໂຈນ: ສິ່ງໃດແມ່ນຂອງທ່ານກໍແມ່ນຂອງຂ້ອຍດ້ວຍ ຂ້ອຍຈະປຸ້ນເອົາ ຍາດຊີງເອົາ.
ປະໂລຫິດແລະຄົນເລວີ: ສິ່ງໃດແມ່ນຂອງຂ້ອຍມັນກໍເປັນຂອງຂ້ອຍ, ຂ້ອຍຕ້ອງຮັກສາໄວ້.
ຊະມາເຣັຽ: ສິ່ງໃດເປັນຂອງເຮົາກໍແມ່ນຂອງທ່ານດ້ວຍ ຂ້ອຍຕ້ອງແບ່ງປັນແລະຊ່ວຍເຫລືອ.

## ນຳໃຊ້ໃນຊີວິດປະຈຳວັນ

5. ອ່ານ ລູກາ 10: 36-37. ເປັນທີ່ຈະແຈ້ງຫລາຍ ມະນຸດຈະສແວງຫາຄວາມພົ້ນດ້ວຍຕົນເອງ, ດ້ວຍການກະທຳດີບໍ່ໄດ້ ແຕ່ຕ້ອງກະທຳຕາມນ້ຳພຣະທັຍຂອງພຣະເຈົ້າເທົ່ານັ້ນ. ພຣະເຢຊູກ່າວໃນສຸດທ້າຍວ່າ "ທ່ານຈົ່ງໄປເຮັດຢ່າງນັ້ນເໝືອນກັນ"

6. ຖາມຄຳຖາມໃນເຈັ້ຽບົດຮຽນ ເພື່ອເປັນການສລຸບບົດຮຽນ.
ທ່ານໄດ້ຮັບບົດຮຽນຫຍັງແດ່?
ອະທິຖານປິດ ໜູນໃຈໃຫ້ທຸກຄົນເຂົ້ານະມັສການພຣະເຈົ້າ.

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 3
## ອ້ອນວອນຕໍ່ພຣະເຈົ້າອົງສັບພັນຍູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 11:5-13
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 11:1-13
**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາສາມາດອ້ອນວອນດ້ວຍຄວາມໝັ້ນໃຈ ຕໍ່ພຣະເຈົ້າຜູ້ຊົງສາມາດ ໃຫ້ຄຳຕອບ ແລະຊົງໃຫ້ພຣະພອນແກ່ພວກເຮົາ.
**ຄຳຖາມເພື່ອສຳຣວດ:** ພວກເຮົາເຊື່ອໄດ້ບໍ່ວ່າພຣະເຈົ້າຈະຕອບຄຳອ້ອນວອນຂອງພວກເຮົາ?
**ຈຸດປະສົງຂອງບົດຮຽນ:** ເພື່ອຢາກຈະອະທິບາຍໃຫ້ເຂົ້າໃຈໃນການອ້ອນວອນ ແລະນ້ຳພຣະທັຍຂອງ ພຣະເຈົ້າທີ່ອົງພຣະເຢຊູໄດ້ຊົງສິດສອນໄວ້ນັ້ນ.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຖາມຄວາມສມັກໃຈຈັກສອງສາມຄົນໃນຫ້ອງຮຽນ ວ່າແມ່ນໃຜຄືເພື່ອນບ້ານທີ່ໃກ້ຊິດຂອງເຂົາທີ່ສຸດ. ຫລັງຈາກສອງຫລືສາມຄົນເວົ້າຜ່ານມາແລ້ວ, ອະນຸຍາດໃຫ້ຄົນໃນຫ້ອງຮຽນຖາມດ້ວຍຄວາມຮູ້ສຶກ ຂອງເຂົາວ່າ ຖ້າເພື່ອນບ້ານທີ່ກ່າວມານັ້ນຫາກມາເຄາະປະຕູຂອງທ່ານໃນຕອນທ່ຽງຄືນເພື່ອຢືມສິ່ງໃດ ສິ່ງນຶ່ງຈາກທ່ານ. ທ່ານຈະກະທຳຢ່າງໃດ?

   ຫລັງຈາກນັ້ນໃຫ້ເຂົ້າຫາຕົວຢ່າງຂອງພຣະຄັມພີ ແລະພຣະຄັມພີກ່າວວ່າຢ່າງໃດ?

### ສຶກສາພຣະຄັມພີ

2. ອ່ານລູກາ ບົດທີ 11:1-4 ໃຫ້ດັງໆ ແລ້ວອະທິບາຍເຖິງຄວາມຕ້ອງການຂອງສາວົກ "ພຣະອົງເຈົ້າຂ້າ ໂປດຊົງສອນການອະທິຖານໃຫ້ພວກຂ້ານ້ອຍແດ່ທ້ອນ" ຫລັງຈາກນັ້ນພຣະອົງກໍຊົງຍົກຕົວຢ່າງໃຫ້ແກ່ ພວກເຂົາ. ໃຫ້ໃຊ້ປະທະກະຖາ (ອະທິບາຍ) ເຖິງຕົວຢ່າງການຮຽນໃນວັນນີ້.

3. ຕົກມາເຖິງຂໍ້ນີ້ໃຫ້ຄົນນຶ່ງທີ່ອ່ານໄດ້ດີທີ່ສຸດໃນຫ້ອງຮຽນອ່ານ. ລູກາ 11:5-8. ນຳພານັກຮຽນສົນທະ ນາໂດຍໃຊ້ຄຳຖາມຕໍ່ໄປນີ້:
   ເປັນຫຍັງຈຶ່ງຈະມີແຂກມາເຖິງໃນຍາມທ່ຽງຄືນ? ແຂກທີ່ບໍ່ໄດ້ນັດໝາຍ, ແຂກທີ່ບໍ່ໄດ້ເຊື້ອເຊີນ.
   ເປັນຫຍັງຄົນຜູ້ນັ້ນຈຶ່ງຄິດວ່າເພື່ອນບ້ານຂອງຕົນຈະມີເຂົ້າຈີ່ ? ທັ້ງໆທີ່ເຮືອນຂອງຕົນເອງບໍ່ມີ.
   ເປັນຫຍັງເພື່ອນບ້ານຂອງເຂົາຈຶ່ງສະແດງທ່າທີທີ່ບໍ່ພໍໃຈອອກມາ ເມື່ອມີເພື່ອນບ້ານໃກ້ຄຽງມາ ເຄາະປະຕູ?
   ເປັນຫຍັງຈຶ່ງຮ້ອງອອກມາ ແລະໃນທີ່ສຸດກໍມາເປີດປະຕູໃຫ້ ແລ້ວເອົາເຂົ້າຈີ່ໃຫ້ຢືມ?

4. ຖາມນັກຮຽນວ່າ "ດີ້ຂໍ" ໝາຍຄວາມວ່າຢ່າງໃດ?
ການຂໍໃນຍາມທ່ຽງຄືນໝາຍຄວາມວ່າຢ່າງໃດ? (ຂໍໃນຍາມງຽບສງັດ, ເຝົ້າດ່ຽວ, ບໍ່ມີສິ່ງລົບກວນ ເຄາະປະຕູໃນຍາມກາງຄືນ ຄົນຢູ່ຂ້າງໃນໄດ້ຍິນຊັດເຈນ......

5. ເຊີນອີກຄົນນຶ່ງອ່ານ ລູກາ 11:9-10. ໃຫ້ອ່ານພຣະຄັມພີແຕກຕ່າງກັນ. ສະບັບພິມເກົ່າ, ສະບັບພາສາເດີມ, ສະບັບພິມຂຶ້ນມາໃໝ່.... ແລ້ວໃຫ້ເບິ່ງຄຳວ່າ ຂໍ, ຊອກ, ພົບ ແລ້ວມາສົນທະນາກັນວ່າມີຄວາມໝາຍຢ່າງໃດ?

6. ໃຫ້ນັກຮຽນອ່ານລູກາ 11:11-13 ແລ້ວອະທິບາຍໃຫ້ສັ້ນແລະຈະແຈ້ງ. ໃນຕົວຢ່າງທີ່ວ່າ "ປາແລະງູ" "ໄຂ່ແລະແມງງອດ" ແລະປຽບທຽບໃສ່ແຜ່ນດິນສວັນຂອງພຣະເຈົ້າ.

## <u>ເຂົ້າໃຈການອະທິຖານ ແລະ ທັມຊາດຂອງພຣະເຈົ້າ</u>

7. ພຣະອົງຊົງຕອບຄຳອະທິຖານ ເມື່ອຂໍໃນນາມຂອງພຣະເຢຊູແມ່ນບໍ່?

8. ການອະທິຖານທີ່ໄດ້ຮັບຄຳຕອບນັ້ນ ແມ່ນຜູ້ທີ່ອະທິຖານດ້ວຍຄວາມເຊື່ອແລະມີພຣະວິນຍານບໍຣິສຸດ. ແມ່ນບໍ່?

9. ພຣະເຈົ້າຊົງຕອບຄຳອະທິຖານຕໍ່ຜູ້ທີ່ມີຄວາມອົດທົນແມ່ນບໍ່?

10. ພຣະເຈົ້າຈະຊົງຮັບຟັງຄຳອະທິຖານຂອງຜູ້ທີ່ມີຄວາມຮັກຕໍ່ພຣະອົງ ແມ່ນບໍ່?

11. ພຣະເຈົ້າຊົງພໍພຣະທັຍຕໍ່ຜູ້ທີ່ທູນຂໍຕໍ່ພຣະອົງແມ່ນບໍ່?

12. ພຣະເຈົ້າມັກຊ່ວຍເຫລືອມະນຸດຫລາຍ ເຖິງແມ່ນວ່າເຂົາບໍ່ສົມຄວນໄດ້ຮັບການຊ່ວຍເຫລືອກໍຕາມ ແມ່ນບໍ່?

13. ພຣະເຈົ້າຊົງຮັກລູກຂອງພຣະອົງຫລາຍກວ່າ ພໍ່ແມ່ຝ່າຍເນື້ອໜັງແມ່ນບໍ່?

## ບົດແນະນຳການສິດສອນ
## ບົດຮຽນທີ 4
## ການຄາດຄິດແມ່ນຫຍັງສຳຄັນທີ່ສຸດໃນຊີວິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ລູກາ 12:13-21
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 12:13-34
**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອເຫັນວ່າວັດຖຸສິ່ງຂອງສຳຄັນກວ່າພຣະເຈົ້າຈະເຮັດໃຫ້ຄົນຜູ້ນັ້ນຂາດການຕຽມພ້ອມໃນວັນຕັດສິນຂອງພຣະເຈົ້າ.
**ຄຳຖາມເພື່ອການສຳຣວດ:** ເມື່ອເນັ້ນຫນັກໃສ່ວັດຖຸສິ່ງຂອງແລ້ວມັນຈະມີຜົນສະທ້ອນຕໍ່ຊີວິດຂ້າພະເຈົ້າຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ຂ້າພະເຈົ້າຊັ່ງຊາເບິ່ງການເນັ້ນຫນັກໃສ່ວັດຖຸສິ່ງຂອງກັບຄຳສັ່ງສອນຂອງພຣະເຢຊູຄຣິດ.

## ແຜນການສິດສອນ

## ຊີວິດສະພາບຕົວຈິງ

1. ເລົ່າເຣື່ອງຂອງຣຸດໃຫ້ສະມາຊິກຫ້ອງຟັງ. ຣຸດເປັນແມ່ຮ້າງຢູ່ເມືອງຊິຄາໂກ. ແຕ່ລະອາທິດລາວຈະຊື້ເລກຣັຖບານຂອງຣັດອິລິນອຍ. ແຕ່ລະອາທິດລາວຊື້ $5 ເພື່ອບັນເທົາຄວາມກົດດັນເສັ້ນປະສາດຂອງລາວ. ຕໍ່ມາສິ່ງມະຫັດສະຈັນເກີດຂຶ້ນ. ລາວຖືກຫວຍຣັຖບານ $22 ລ້ານ. ລາວມີຄວາມດີໃຈຫລາຍ. ລາວອອກການແລ້ວໄປຊື້ເຮືອນສິບແປດຫ້ອງນອນ, ເສື້ອຜ້າຣາຄາແພງ, ແລະຣົດ ຈາກົວ. ລາວສົ່ງລູກຊາຍຝາແຝດຂອງລາວໄປໂຮງຮຽນຈ້າງ. ເຖິງຢ່າງໃດກໍຕາມ ຫນ້າແປກຫລາຍ ປີຕໍ່ມາລາວມີຄວາມກົດດັນທາງດ້ານປະສາດຫລາຍກວ່າເກົ່າ. ເມື່ອຮອດທ້າຍປີທ່ານຫມໍຮັກສາໂລກປະສາດໄດ້ບອກລາວວ່າ ລາວມີບັນຫາເຣື່ອງໂລກປະສາດປະຈຳ (chronic depression).

ທ່ານຫມໍ ມາຕິນ ອີ ພີ ເຊລິແມນ ( Dr. Martin E. P. Seligman is the former president of the American Psy-
chological Assocition) ອາດີດປະທານຂອງສະມາຄົມຈິດຕະວິທະຍາຂອງອະເມຣິກັນ ແລະຂຽນປຶ້ມຊາວຫົວກ່ຽວ
ກັບວິຊານີ້ຈາກການຄົ້ນຄວ້າຂອງລາວໄດ້ຊີ້ໃຫ້ເຫັນວ່າ ຄົນເຮົານີ້ເມື່ອມີສິ່ງທີ່ຕ້ອງການໃນຊີວິດແລ້ວ ມີເງິນເພີ້ມເຂົ້າມາຈະເພີ້ມຄວາມມ່ວນຊື່ນໃຫ້ຫນ້ອຍນຶ່ງ ຫລືກໍບໍ່ມີເລີຍ. ລາວສລູບວ່າ ການເຫັນວ່າວັດຖຸສິ່ງຂອງສຳຄັນກວ່າສິ່ງອື່ນ ແທນທີ່ຈະເຮັດໃຫ້ເຫດການດີຂຶ້ນ ແຕ່ເຮັດໃຫ້ຮ້າຍລົງ: ບໍ່ວ່າຈະມີລາຍໄດ້ໃນຣະດັບໃດກໍຕາມ, ຜູ້ທີ່ເຫັນວ່າເງິນມີຄຸນຄ່າຫລາຍກວ່າເປົ້າຫມາຍອື່ນໆທີ່ຕັ້ງໄວ້ ຈະບໍ່ພໍໃຈໃນລາຍໄດ້ທີ່ຕົນໄດ້ຮັບ ແລະຮວມທັງຊີວິດຂອງລາວດ້ວຍ. ລາວມ້ວນທ້າຍຄວາມເວົ້າຂອງລາວວ່າ "ມັນເປັນສິ່ງທີ່ປລາດຫລາຍ."

ໃຫ້ສະມາຊິກຫ້ອງອອກຄວາມເຫັນໃນຂໍ້ຄວາມຂອງ ທ່ານຫມໍ ມາຕິນ ແລະນຳພວກເຂົາເຂົ້າສູ່ບົດຮຽນໂດຍກ່າວວ່າ ຄຳອຸປມາຂອງພຣະເຢຊູຈະຊ່ອຍໃຫ້ພວກເຮົາແຕ່ລະຄົນຊັ່ງຊາເບິ່ງການເນັ້ນຫນັກໃສ່ວັດຖຸສິ່ງຂອງແລ້ວ ມັນຈະມີຜົນສະທ້ອນຕໍ່ຊີວິດຂອງບຸກຄົນນັ້ນຢ່າງໃດ.

## <u>ສຶກສາບົດຮຽນ</u>

2. ໃຫ້ຂຽນຫົວຂໍ້ຂອງບົດຮຽນ ແຕ່ລະຫົວຂໍ້ໃສ່ເຈັ້ຽແຂວ:
   (1) ຢ່າຍອມຈຳນົນໃຫ້ຄວາມໂລບ (12:13-15)
   (2) ຈົ່ງຕຽມພ້ອມວັນນີ້ໃຫ້ກັບພຣະເຈົ້າ (12:16-20)
   (3) ຈົ່ງຮັ່ງມີກັບພຣະເຈົ້າ (12:21)

3. ໃຫ້ຜູ້ນຶ່ງອ່ານ ພຣະທັມລູກາ 12:13-15. ໃຫ້ບັນລະຍາຍສັ້ນໆກ່ຽວກັບກົດໝາຍຂອງຊາວຍິວໃນການແບ່ງປັນມໍຣະດົກລະຫວ່າງອ້າຍກົກແລະນ້ອງຄົນຕໍ່ໄປ ແລະເຣື່ອງພຣະເຢຊູໄດ້ຕອບສນອງຕໍ່ຄວາມຮ້ອງຂອງຊາຍຄົນນັ້ນ. ໃຫ້ຕັ້ງຄຳຖາມວ່າ <u>ພຣະເຢຊູຊົງສະແດງອາການຢ່າງໃດຕໍ່ການຮັກວັດຖຸສິ່ງຂອງຫລາຍກວ່າສິ່ງອື່ນ? ຄົນມີຄວາມໂລບມີລັກສະນະຢ່າງໃດ?</u>

4. ອ້າງອີງຕາມຫົວຂໍ້ທີສອງຂອງບົດຮຽນ. ໃຫ້ຂຽນຂໍ້ຄວາມສີ່ຂໍ້ດັ່ງຕໍ່ໄປນີ້ໃສ່ເຈັ້ຽແຂວ:
   (1) ເສດຖີຄົນນັ້ນບໍ່ຍອມຮັບຮູ້ວ່າພຣະເຈົ້າຊົງປະທານຜົລປູກທີ່ອຸດົມສົມບູນໃຫ້ແກ່ລາວ.
   (2) ເສດຖີຄົນນັ້ນຄິດເຖິງແຕ່ຕົວຂອງລາວເອງ.
   (3) ພຣະເຈົ້າບໍ່ຢາກໃຫ້ມະນຸດໄດ້ຮັບການປົກປ້ອງ.
   (4) ພຣະເຈົ້າຢາກໃຫ້ມະນຸດເພິ່ງໃນພຣະອົງແທນທີ່ຈະໄປເພິ່ງກັບວັດຖຸສິ່ງຂອງທີ່ຕົນມີຢູ່.

   ເອົາເຈັ້ຽແຂວທີ່ມີຂໍ້ຄວາມທີ່ຂຽນໄວ້ນັ້ນຕັ້ງໄວ້ບ່ອນທີ່ສະມາຊິກອ່ານໄດ້ ແລະໃຫ້ພວກເຂົາເລືອກເອົາຂໍ້ຄວາມທີ່ຖືກຕ້ອງທີ່ສຸດ ຫລັງຈາກພວກເຂົາໄດ້ຟັງພຣະທັມລູກາ 12:16-20. ຫລັງຈາກໄດ້ອ່ານພຣະທັມຕອນນັ້ນແລ້ວ ໃຫ້ສະມາຊິກຕອບ ເປັນຫຍັງພວກເຂົາຈຶ່ງເລືອກເອົາຂໍ້ຄວາມນັ້ນ.

5. ອ້າງອີງຕາມພຣະທັມລູກາ 12:21 ແລະກ່າວສັ້ນໆເຖິງຄວາມໝາຍຂອງຈົ່ງຮັ່ງມີກັບພຣະເຈົ້າ (ໃຫ້ອ່ານໃນບົດຮຽນຂອງສະມາຊິກຫ້ອງ). ໃຫ້ສລຸບບົດຮຽນໂດຍອ້າງອີງໃສ່ ພຣະທັມລູກາ 12:22-34 ແລະຊີ້ບອກພວກເຂົາວ່າພຣະເຢຊູຊົງກ່າວຢ່າງໃດກ່ຽວກັບເຣື່ອງຄວາມກັງວົນ, ການຊົງປະທານຈາກພຣະເຈົ້າ, ແລະ ການສະສົມຊັບສົມບັດໄວ້ໃນແຜ່ນດິນສວັນ.

## <u>ຫມູນໃຊ້ໃນການກະທຳ</u>

6. ແນະນຳສະມາຊິກຫ້ອງໃຫ້ເບິ່ງຄຳຖາມໃນບົດຮຽນຂອງພວກເຂົາ. ໜູນໃຈໃຫ້ພວກເຂົາຕອບຄຳຖາມແຕ່ລະຂໍ້ໂດຍອ້າງອີງໃສ່ຄຳອຸປມາຂອງພຣະເຢຊູ.

7. ຖ້າໄຟໄໝ້ເຮືອນຂອງທ່ານຄືນນີ້ ທ່ານຈະຊ່ອຍເອົາອັນໃດອອກກ່ອນ? ຄຸນຄ່າຂອງສິ່ງຂອງອັນນັ້ນມີຫລາຍປານໃດ? ເປັນຫຍັງສິ່ງຂອງນັ້ນຄືມີຄຸນຄ່າຕໍ່ທ່ານແທ້? ໃຫ້ສະມາຊິກຫ້ອງຕອບຄຳຖາມດັ່ງກ່າວ. ສລຸບບົດຮຽນໂດຍໃຫ້ພວກເຂົາໃຊ້ເວລາຈັກສອງຫາສາມນາທີຄິດເຖິງພວກເຂົາເອງໃນການເນັ້ນໜັກໃສ່ວັດຖຸສິ່ງຂອງກັບຄຳສັ່ງສອນຂອງພຣະເຢຊູ. ປິດບົດຮຽນດ້ວຍການອ້ອນວອນ.

## ບົດແນະນຳການສິດສອນ
## ບົດຮຽນທີ 5
## ຈົ່ງສຳນຶກເຖິງຄວາມຈຳເປັນໃນການກັບໃຈ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ລູກາ 13:1-9
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 13:1-9
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງຮຽກຮ້ອງໃຫ້ຝູງຊົນຮັບເອົາພຣະຄຸນຂອງພຣະເຈົ້າ ພຣະອົງໃຫ້ໂອກາດພວກເຂົາກັບໃຈເສັຽໃໝ່ ໃນເມື່ອພວກເຂົາຍັງມີໂອກາດຢູ່.
**ຄຳຖາມເພື່ອການສຳຣວດ:** ເນື່ອງດ້ວຍພຣະຄຸນຂອງພຣະເຈົ້າ ພວກເຮົາຈຳເປັນບໍ່ຈະຕ້ອງກັບໃຈ?
**ຈຸດປະສົງຂອງບົດຮຽນນີ້:** ດ້ວຍຄວາມສັມພັນກັບພຣະຄຸນຂອງພຣະເຈົ້າແລະການຮຽກຮ້ອງຂອງພຣະອົງເພື່ອໃຫ້ຂ້າພະເຈົ້າກັບໃຈເສັຽໃໝ່ໃນຊີວິດນີ້.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ເລືອກຫາຂ່າວຄາວໃນໜັງສືພິມ ຫລື ວາຣະສາຣທີ່ມີຫົວເຣື່ອງຄ້າຍຄືກັບເຣື່ອງລາວໃນພຣະທັມລູກາ 13:1 ແລະ 13:4. ນຳເອົາເຣື່ອງລາວໃນໜ້າໜັງສືພິມມາເລົ່າໃຫ້ສະມາຊິກຫ້ອງຟັງ ແລະບອກໃຫ້ພວກເຂົາຟັງວ່າ ໃນສມັຍຂອງພຣະເຢຊູມີເຫດການຢ່າງນັ້ນ. (ແຜ່ນດິນໄຫວທີ່ປະເທດອີຣານໃນໝໍ່ໆມານີ້ກໍໄດ້).

2. ໃຊ້ເຈັ້ຽແຂວນໃບນຶ່ງແລະຂຽນຫົວຂໍ້ຂອງບົດຮຽນດັ່ງຕໍ່ໄປນີ້:
   (1) ຄວາມທຸກຍາກລຳບາກທີ່ໄດ້ຮັບແມ່ນຍ້ອນຄວາມບາບສເມີໄປບໍ? (13:1-3)
   (2) ຄວາມຫາຍະນະແມ່ນການບັນຊາສັ່ງຈາກພຣະເຈົ້າສເມີໄປບໍ? (13:4-5)
   (3) ພວກເຮົາຈະຈັດຕຽມໃນວັນການຕັດສິນຢ່າງໃດ? (13:6-9)

### ສຶກສາບົດຮຽນ

3. ບັນລະຍາຍຫລັກຄວາມເຊື່ອຂອງຊົນຊາດຢິວກ່ຽວກັບເຣື່ອງຂອງຄວາມທຸກລຳບາກ ພວກເຂົາເຊື່ອວ່າຜູ້ທີ່ໄດ້ຮັບຄວາມທຸກລຳບາກເປັນຄົນມີບາບ. ໃຊ້ເນື້ອຫາໃນບົດຮຽນທີ່ມີຫົວຂໍ້ກ່ຽວກັບ "ຄວາມທຸກຍາກລຳບາກທີ່ໄດ້ຮັບແມ່ນຍ້ອນຄວາມບາບສເມີໄປບໍ? (13:1-3)" ໃຫ້ຜູ້ນຶ່ງອ່ານພຣະທັມລູກາ 13:1-3. ອະທິບາຍເຫດການທີ່ອາດຈະເປັນໄປໄດ້ ຄືທະຫານໂຣມັນໄດ້ຂ້າປະຊາຊົນໃນຂນະທີ່ພວກເຂົາກຳລັງຖວາຍເຄື່ອງບູຊາ ແລະພຣະເຢຊູຊົງປະຕິເສດຄວາມຄິດເຫັນຂອງພວກເຂົາຊຶ່ງຄິດວ່າປະຊາຊົນທີ່ຖືກຂ້ານັ້ນເປັນຄົນທີ່ມີບາບຫລາຍກວ່າຄົນອື່ນ.

4. ໃຫ້ຜູ້ນຶ່ງອ່ານພຣະທັມລູກາ 13:4-5. ບັນລະຍາຍສັ້ນໆກ່ຽວກັບພັຍທັມຊາດບໍ່ແມ່ນການຕັດສິນລົງໂທດຈາກພຣະເຈົ້າສເມີໄປ. ໃຫ້ຖາມສະມາຊິກຫ້ອງວ່າ, ເປັນຫຍັງພຣະເຢຊູຈຶ່ງໃຊ້ເຫດການທີ່ເກີດຂຶ້ນເພື່ອຮຽກຮ້ອງໃຫ້ປະຊາຊົນກັບໃຈໃໝ່? ໜູນໃຈໃຫ້ສະມາຊິກຫ້ອງອອກຄວາມເຫັນໃນຂໍ້ຄວາມຕໍ່ໄປນີ້: "ເຫດການທີ່ເກີດຂຶ້ນບໍ່ແມ່ນການຕັດ

ສິນລົງໂທດຈາກພຣະເຈົ້າທຸກເທື່ອ. ຄວາມທຸກລຳບາກຂອງພວກເຮົາອາດຈະສະແດງໃຫ້ເຫັນວ່າພຣະເຈົ້າບໍ່ພໍພຣະທັຍກັບພວກເຮົາ, ຫລືເປັນການກະທຳຂອງຊາຕານ, ຫລື ເປັນການກະທຳຂອງໂລກກໍໄດ້. ບໍ່ມີຜູ້ໃດເລີຍຖືກຍົກເວັ້ນຈາກຄວາມທຸກລຳບາກ."

5. ໃຫ້ອ່ານພຣະທັມລູກາ 13:6-9. ເຊື້ອເຊີນໃຫ້ສະມາຊິກຫ້ອງເລົ່າປະສົບການທີ່ພວກເຂົາຮູ້ກ່ຽວກັບຕົ້ນເດື່ອເທດ. ອະທິບາຍໃຫ້ຄວາມແຈ່ມແຈ້ງກ່ຽວກັບຕົ້ນເດື່ອເທດ ມັນຈະບໍ່ອອກໝາກຜົນຫລາຍຈົນກວ່າຮອດປີທີສາມ. ໃຊ້ຄຳອະທິບາຍຈາກບົດຮຽນຂອງສະມາຊິກຫ້ອງ. ອະທິບາຍຈຸດສຳຄັນຂອງຄຳອຸປມາໃນເຣື່ອງນີ້.

## ຫມູນໃຊ້ໃນການກະທຳ

6. ໃຫ້ໄປອັດເປັນຫລາຍໆໃບແລະຢາຍຂໍ້ຄວາມຕໍ່ລົງໄປນີ້ໃຫ້ສະມາຊິກຫ້ອງ. ໃຫ້ພວກເຂົາຕອບ ຖືກ ຫລື ຜິດ ຕາມຄວາມເຂົ້າໃຈຂອງພວກເຂົາ. ບອກພວກເຂົາວ່າ ບໍ່ມີໃຜຮູ້ຄຳຕອບຂອງພວກເຂົາມີແຕ່ຕົວເຂົາເອງ.

____1. ຄວາມທຸກລຳບາກພິສູດໃຫ້ເຫັນວ່າຍ້ອນຄວາມບາບສເມີໄປ.
____2. ບາງຄັ້ງຄວາມທຸກລຳບາກຂອງພວກເຮົາເປັນຍ້ອນຄວາມຜິດຂອງພວກເຮົາເອງ, ແຕ່ບໍ່ສເມີໄປ.
____3. ພັຍທັມຊາດແມ່ນຍ້ອນຄວາມໂກດຮ້າຍຂອງພຣະເຈົ້າສເມີໄປ ພຣະອົງໂກດຮ້າຍຍ້ອນຄວາມບາບຂອງມະນຸດ.
____4. ພຣະເຈົ້າຊົງມີພຣະຄຸນ ພຣະອົງໃຫ້ໂອກາດກັບໃຈເສັຽໃຫມ່.
____5. ມະນຸດເພິ່ງພຣະເຈົ້າໃຫ້ໂອກາດພວກເຂົາກັບໃຈໃຫມ່ອີກເທື່ອນຶ່ງຢູ່ສເມີ.
____6. ການຕັດສິນຂອງພຣະເຈົ້າມີຈິງແທ້.
____7. ພຣະເຢຊູຊົງຮຽກຮ້ອງໃຫ້ຝູງຊົນຮັບເອົາພຣະຄຸນຂອງພຣະເຈົ້າ ພຣະອົງໃຫ້ໂອກາດພວກເຂົາກັບໃຈເສັຽໃຫມ່ ໃນເມື່ອພວກເຂົາຍັງມີໂອກາດຢູ່.
____8. ມະນຸດຖືກຕັດສິນຕາມການເຊື່ອຟັງຂອງພວກເຂົາໃນພຣະປະສົງຂອງພຣະເຈົ້າສຳລັບຊີວິດຂອງພວກເຂົາ.
____9. ທຸກຄົນຈະຕ້ອງກັບໃຈຈາກຄວາມບາບ.
____10. ພຣະເຈົ້າຕ້ອງການໃຫ້ມະນຸດຮູ້ພຣະປະສົງຂອງພຣະອົງຫລາຍກວ່າພວກເຂົາຢາກຈະຮູ້.

ໃຊ້ຂໍ້ຄວາມຂ້າງເທິງນັ້ນຊ່ອຍໃຫ້ສະມາຊິກຫ້ອງເຫັນຄວາມສັມພັນກັບພຣະຄຸນຂອງພຣະເຈົ້າແລະການຮຽກຮ້ອງຂອງພຣະອົງໃຫ້ພວກເຂົາກັບໃຈເສັຽໃຫມ່ສຳລັບຊີວິດຂອງພວກເຂົາ. ຄຳຕອບ (1-ຜິດ; 2-ຖືກ; 3-ຜິດ; 4-ຖືກ; 5-ຜິດ; 6-ຖືກ; 7-ຖືກ; 8-ຖືກ; 9-ຖືກ; 10-ຖືກ.)

7. ນຳພາສະມາຊິກຫ້ອງໃຫ້ຕອບຄຳຖາມໃນບົດຮຽນຂອງພວກເຂົາ, ໂດຍສະເພາະແລ້ວ ແມ່ນຂໍ້ທີ 4. ໃຫ້ປິດບົດຮຽນດ້ວຍການອະທິຖານ ເພື່ອໃຫ້ທຸກຄົນເຂົ້າໃຈວ່າ ພວກເຂົາຕ້ອງກັບໃຈໃຫມ່ເນື່ອງດ້ວຍພຣະຄຸນຂອງພຣະເຈົ້າ.

## ບົດແນະນຳການສິດສອນ
## ບົດຮຽນທີ 6
## ຈົ່ງເພິ່ງໃນພຣະຄຸນຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ລູກາ 14:7-14

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 14:1-14

**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອຕິດຕາມພຣະເຢຊູ ພວກເຮົາຈະຕ້ອງໄດ້ປ່ຽນທັສນະ ທິດທາງຂອງເຮົາໃນເຣື່ອງສແວງຫາກຽດແລະສັກສີມາສູ່ຕົນເອງ, ໃຫ້ຄົນອື່ນຮັບຮູ້ຕົນ, ແລະຕ້ອງການຮັບຮອງຈາກຄົນທົ່ວໄປ.

**ຄຳຖາມເພື່ອການສຳຣວດ:** ຄວາມສຳເຣັດມີຄວາມຫມາຍຢ່າງໃດສຳລັບທ່ານ?

**ຈຸດປະສົງຂອງບົດຮຽນນີ້:** ໃຫ້ຮູ້ຈັກແຈກແຍກຄວາມສຳເຣັດທີ່ພຣະເຢຊູປະຕິເສດແລະຄວາມສຳເຣັດທີ່ພຣະອົງເຫັນພ້ອມໃນຄຳອຸປມາແລະການບັນລະຍາຍຕາມຄຳສອນຂອງພຣະອົງ.

### ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ເລີ່ມກ່າວຕໍ່ສະມາຊິກຫ້ອງວ່າ ໃນວົງການຄຣິສຕຽນສມັຍນີ້ໄດ້ເນັ້ນຫນັກກ່ຽວກັບແນວທາງຄວາມຄິດທີ່ເອີ້ນກັນວ່າ ຜູ້ນຳ ຜູ້ຮັບໃຊ້. ໃຫ້ຂຽນສອງຄຳນີ້ໃສ່ກະດານ. ໃຫ້ພວກເຂົາສົນທະນາກັນກ່ຽວກັບຄວາມຫມາຍຂອງຄຳນີ້ ແລະຈະນຳໄປໃຊ້ກັບຊີວິດຂອງຄຣິສຕຽນໄດ້ຢ່າງໃດ. ໃຫ້ຂຽນຄວາມເຫັນຂອງພວກເຂົາໃສ່ກະດານ.

### ສຶກສາບົດຮຽນ

2. ໃຫ້ເຄິ່ງນຶ່ງຂອງຫ້ອງຮຽນເປີດໄປໃນພຣະທັມມັດທາຍ 5:1-10 ແລະອີກເຄິ່ງນຶ່ງເປີດໄປລູກາ 14:7-14. ຫລັງຈາກນັ້ນໃຫ້ພວກເຂົາອ່ານ ແລ້ວສົນທະນາກັນກ່ຽວກັບເຣື່ອງຊີວິດທີ່ຖ່ອມຕົວຕາມຄຳສອນຂອງອົງພຣະເຢຊູ. ໃຫ້ເວລາພວກເຂົາສົນທະນາກັນກ່ຽວກັບພຣະທັມສອງຕອນນີ້.

3. ໃຫ້ອະທິບາຍກ່ຽວກັບສະຖານທີ່ແລະການເປັນມາຂອງຄຳອຸປມາ. ໃຫ້ຖາມວ່າ, "ບ່ອນມີກຽດ" ໃນລູກາ 14:8 ແລະ "ບ່ອນຕ່ຳທີ່ສຸດ" ໃນ 14:9 ມີຄວາມຫມາຍວ່າຢ່າງໃດ? ໃຫ້ສລູບຄວາມເຣື່ອງລາວສັງຄົມກ່ຽວກັບງານລ້ຽງ ຫລື ການເຊື້ອເຊີນໄປໃນງານລ້ຽງຂອງຊາວຢິວ.

ການຮັບປະທານອາຫານຮ່ວມກັນມີພາກສ່ວນສຳຄັນຫລາຍໃນສມັຍຂອງພຣະຄັມພີ. ຊາວຢິວໄດ້ແບ່ງແຍກຣະດັບສັງຄົມຂອງພວກເຂົາ ບໍ່ວ່າໃຜກໍຕາມ ພວກເຂົາຈະກິນເຂົ້າຮ່ວມພາກັບຄົນໃນຣະດັບດຽວກັນເທົ່ານັ້ນ. ນອກເຫນືອໄປຈາກນັ້ນ ໃນງານລ້ຽງເຈົ້າພາບຈະເປັນຜູ້ເຜີຍໃຫ້ເຫັນຣະດັບສັງຄົມຂອງແຂກທີ່ມາແຕ່ລະຄົນ ຄືວ່າ ລາວຈະຈັດບ່ອນນັ່ງໃຫ້ຕາມແຕ່ຣະດັບ. ໃນຖານະກາງຂອງຊົນຊາດຢິວເອງ, ພວກຟາຣີຊາຍຈະບໍ່ກິນເຂົ້າຮ່ວມພາກັບຊາວຢິວສາມັນທັມດາ. ພວກເຂົາບໍ່ຮູ້ວ່າອາຫານທີ່ຈັດມານັ້ນຈະບໍຣິສຸດຕາມທາງສາສນາຫລືບໍ່ ສະນັ້ນພວກເຂົາຈຳເປັນ

ຕ້ອງຣະມັດລະວັງ.

ຕາມປົກຕິແລ້ວ ຊາວຢິວກິນອາຫານແຕ່ສອງຄາບ ຕອນເຊົ້າແລະຕອນທ່ຽງ. ໃນວັນຊະບາໂຕ ຈະມີຄາບເຂົ້າຂອງຊະບາໂຕຕ່າງຫາກ ເປັນຄາບເຂົ້າທີສາມ. ພວກຟາຣີຊາຍໄດ້ວາງກົດລະບຽບເປັນຂັ້ນຕອນ ເຊັ່ນລ້າງມືກ່ອນຈະກິນເຂົ້າ. ກົດລະບຽບດັ່ງກ່າວນີ້ບໍ່ມີໃນພຣະສັນຍາເດີມ, ແຕ່ວ່າ ພວກເຂົາໄດ້ຕື່ມເຂົ້າມາ. ພຣະເຢຊູບໍ່ໄດ້ປະຕິບັດຕາມຈຶ່ງເປັນເຫດໃຫ້ພຣະອົງມີການປະທະກັນກັບພວກເຂົາ (ລູກາ 11:37-42).

ການຮັບປະທານອາຫານໃນວັນຊະບາໂຕ ຈຶ່ງເປັນຄາບທີ່ພິເສດໄປກວ່າຄາບເຂົ້າທັມດາ. ພວກເຂົານັ່ງອີງໝອນໃນຂນະຮັບປະທານອາຫານ. ແຕ່ລະບ່ອນທີ່ຈະໃຫ້ແຂກນັ່ງນັ້ນແມ່ນເຈົ້າພາບເປັນຜູ້ຈັດໃຫ້. ພຣະເຢຊູໃຊ້ຄຳວ່າ "ຈັດການກິນລ້ຽງ" ໃນພຣະທັມລູກາ 14:13 ເຮັດໃຫ້ພວກເຂົາເຫັນພາບຜິດຂອງພຣະອົງ. ພຣະອົງບອກໃຫ້ພວກເຂົາໄປເຊີນຄົນທີ່ສັງຄົມລັງກຽດ ດ້ວຍເຫດນີ້ຈຶ່ງເຮັດໃຫ້ພວກເຂົາບໍ່ມັກພຣະອົງຫລາຍຂຶ້ນ.

4. ໃຊ້ຄຳຖາມດັ່ງຕໍ່ລົງໄປນີ້ເພື່ອການສົນທະນາ:
   - ທ່ານຈະມີຄວາມຮູ້ສຶກຢ່າງໃດ ຖ້າເຈົ້າພາບຫາກມາບອກໃຫ້ທ່ານໄປນັ່ງຢູ່ບ່ອນຕໍ່າທີ່ສຸດ?
   - ທ່ານຈະມີຄວາມຮູ້ສຶກຢ່າງໃດ ຖ້າເຈົ້າພາບຫາກມາບອກທ່ານໃຫ້ໄປນັ່ງຢູ່ບ່ອນສູງທີ່ສຸດ?

5. ອ້າງອີງຕາມພຣະທັມລູກາ 14:12-13, ແລະເຊື້ອເຊີນໃຫ້ສະມາຊິກຫ້ອງມາສົນທະນາກັນວ່າ ພຣະເຢຊູວ່າຢ່າງນັ້ນມີຄວາມໝາຍວ່າຢ່າງໃດ. ໃຫ້ອະທິບາຍຕື່ມໂດຍໃຊ້ປຶ້ມບົດຣຽນຂອງພວກສະມາຊິກຫ້ອງ.
6. ໃຫ້ເນັ້ນເຖິງເຫດຜົນຂອງບົດຣຽນນີ້. ຈຸດເປົ້າໝາຍສຳຄັນຂອງບົດຣຽນນີ້ ບໍ່ໄດ້ສອນໃຫ້ທ່ານໃຫ້ຮູ້ຈັກເຂົ້າສັງຄົມ. ໃຫ້ຖາມພວກເຂົາວ່າ <u>ຖ້າຢ່າງນັ້ນ ພຣະເຢຊູມີພຣະປະສົງອັນໃດຈຶ່ງໄດ້ສັ່ງສອນໃນເຣື່ອງນີ້?</u> (ໃຫ້ເບິ່ງຈຸດສຳຄັນຂອງບົດຣຽນໃນບົດຣຽນຂອງສະມາຊິກຫ້ອງ. ແນະນຳໃຫ້ພວກເຂົາເຂົ້າໃຈຂໍ້ຄວາມດັ່ງກ່າວນີ້, "ພຣະອົງຊົງສອນວ່າ ເມື່ອຄົນໃດຫາກຊອກສແວງຫາກຽດແລະຊື່ສຽງຕາມຄວາມຢາກໄດ້ໃນທາງຂອງມະນຸດແລ້ວສ່ວນຫລາຍພວກເຂົາຈະນຳຕົວເອງເຂົ້າສູ່ບ້ວງແຮ້ວຂອງການສູນເສັຽກຽດແລະສັກສີ.")

## <u>ໜູນໃຊ້ໃນການກະທຳ</u>

7. ຊີ້ໃຫ້ພວກສະມາຊິກຫ້ອງເຫັນໃນຕອນທ່ານເລີ້ມບົດຣຽນ ທ່ານໄດ້ອ້າງອີງໃສ່ <u>ຜູ້ນຳ ຜູ້ຮັບໃຊ້</u>. ກ່າວໃຫ້ພວກເຂົາຟັງວ່າ ພວກເຮົາຈະເຫັນໄດ້ວ່າໃນຄຳສອນນີ້ ພຣະອົງມີພຣະປະສົງຢາກໃຫ້ພວກເຮົາເຫັນວ່າການຮັບໃຊ້ຜ່ານທາງການຖ່ອມຕົວ. ອ້າງອີງຕາມຄຳແນະນຳຄວາມໝາຍຂອງຄຳວ່າ <u>ຜູ້ນຳ ຜູ້ຮັບໃຊ້</u>. ຮ້ອງຂໍໃຫ້ສະມາຊິກຫ້ອງແຕ່ລະຄົນເລືອກເອົາພາກສ່ວນນຶ່ງຂອງຄຳສອນຂອງພຣະເຢຊູທີ່ໄດ້ຮຽນມານຳກັນດຽວນີ້. ໃຫ້ນຳໄປອະທິຖານໃຫ້ພຣະອົງຊ່ອຍໃຫ້ພວກເຂົານຳໄປປະຕິບັດໃນລັກສະນະຂອງການຮັບໃຊ້ດ້ວຍຄວາມຖ່ອມຕົວໃນອາທິດນີ້.

# ບົດແນະນຳການສິດສອນ
# ບົດຮຽນທີ 7
# ຈົ່ງຊັ່ງຊາເບິ່ງຜົນໄດ້ຜົນເສັຽ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ລູກາ 14:25-33

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 14:25-35

**ຈຸດສຳຄັນຂອງບົດຮຽນນີ້:** ການຕິດຕາມພຣະເຢຊູມີຄວາມຮຽກຮ້ອງໃຫ້ມີການປ່ຽນແປງໃນການໃຊ້ຊີວິດ ຊຶ່ງເປັນການຊັ່ງຊາເບິ່ງຜົນດ້ວຍສະຕິປັນຍາອັນສລາດແລະຈຳເປັນອີກດ້ວຍ.

**ຄຳຖາມເພື່ອການສຳຣວດ:** ທ່ານສມັກໃຈອຸທິດຊີວິດຂອງທ່ານຈະຕິດຕາມພຣະເຢຊູຫລາຍປານໃດ?

**ຈຸດປະສົງຂອງບົດຮຽນນີ້:** ການຊັ່ງຊາເບິ່ງວ່າ ຂ້າພະເຈົ້າຈະສມັກໃຈເປັນສິດຂອງພຣະເຢຊູ ຕາມຄວາມຮຽກຮ້ອງຂອງພຣະອົງໃຫ້ມີການປ່ຽນແປງໃນຊີວິດ.

## ແຜນການສິດສອນ

## ຊີວິດສະພາບຕົວຈິງ

1. ໃຫ້ບອກສະມາຊິກຫ້ອງເອົາກະເປົາເງິນຂອງພວກເຂົາອອກມາ. ໃຫ້ພວກເຂົາຊອກຫາສິ່ງນຶ່ງທີ່ມີຄວາມຫມາຍບອກໃຫ້ຮູ້ວ່າ ການຊັ່ງຊາເບິ່ງຜົນ ແລະຄວາມຫມາຍອີກອັນນຶ່ງແມ່ນ ສິ່ງທີ່ຈະຕ້ອງໄດ້ສລະ (ເງິນ, ບັດຊື້ເງິນເຊື່ອ, ຮູບຖ່າຍຂອງຄົນໃນຄອບຄົວ, ແລະອື່ນໆ). ຕໍ່ມາໃຫ້ພວກເຂົາບັນລະຍາຍໃຫ້ຟັງວ່າ ອັນໃດໃນຈຳນວນນັ້ນທີ່ພວກເຂົາເຫັນວ່າມີຄວາມຫມາຍຂອງ ການຊັ່ງຊາເບິ່ງຜົນໃນສິ່ງທີ່ຈະຕ້ອງໄດ້ສລະ.

2. ແນະນຳໄປວ່າ ການຕິດຕາມພຣະເຢຊູໃນການເປັນສິດມີຄວາມຮຽກຮ້ອງໃຫ້ຊັ່ງຊາເບິ່ງຜົນທີ່ຈະຕ້ອງໄດ້ສລະ. ຫນູນໃຈສະມາຊິກຫ້ອງໃຫ້ຕຶກຕອງຄຳຖາມດັ່ງຕໍ່ໄປນີ້ ໃນຂນະສຶກສາບົດຮຽນນີ້: ຂ້າພະເຈົ້າຈະມີຄວາມສມັກໃຈເຂົ້າມາເປັນສິດຂອງພຣະເຢຊູໄດ້ຫລາຍປານໃດ ໃນເມື່ອມີການຮຽກຮ້ອງໃຫ້ມີການປ່ຽນແປງໃນຊີວິດຂອງຂ້າພະເຈົ້າຫລາຍແທ້?

## ສຶກສາບົດຮຽນ

3. ໃຫ້ຂຽນຫົວຂໍ້ໃຫຍ່ສອງຂໍ້ໃສ່ເຈັ້ຽແຂນຫລືກະດານກໍໄດ້ ແລະຈົ່ງບ່ອນວ່າງໄວ້ບັນທຶກຄວາມຄິດເຫັນຂອງພວກເຂົາ.
   ຫົວຂໍ້ໃຫຍ່ເບື້ອງຊ້າຍຂຽນວ່າ: ຄວາມຮຽກຮ້ອງຂອງພຣະເຢຊູໃຫ້ມີການປ່ຽນແປງຊີວິດໃນການເປັນສິດ.
   ຫົວຂໍ້ໃຫຍ່ເບື້ອງຂວາຂຽນວ່າ: ຄວາມສມັກໃຈຈະເຂົ້າມາເປັນສິດຂອງພຣະເຢຊູຢູ່ໃນຣະດັບໃດ.

4. ໃນຂນະທີ່ບັນທຶກຄວາມຄິດເຫັນຂອງສະມາຊິກຫ້ອງລົງໃສ່ໃນກະດານນັ້ນ. ໃຫ້ຖາມພວກເຂົາວ່າ, ເປັນຫຍັງການຮັບຮູ້ເຖິງຄວາມທຸກລຳບາກແລະການທົດລອງໃນຊີວິດຄຣິສຕຽນ ເພື່ອຈະມາເປັນສິດຂອງພຣະເຢຊູສຳຄັນຫລາຍແທ້? (ເພື່ອພວກເຮົາຈະຍືນຍັດໃນຄວາມຈົ່ງຮັກພັກດີຕໍ່ພຣະອົງ ເຖິງແມ່ນວ່າຈະມີການທົດລອງໃດໆກໍຕາມ).

5. ໃຫ້ສົມທຽບອາການສະແດງໂຕ້ຕອບຂອງພວກຟາຣີຊາຍແລະປະຊາຊົນຕໍ່ພຣະເຢຊູ, ສິ່ງອັສຈັນ, ແລະຄໍາສອນຂອງພຣະອົງ (ໃຫ້ເບິ່ງ ພຣະທັມລູກາ ໂດຍສະເພາະແລ້ວແມ່ນບົດທີ 14:1, 25)

6. ນໍາພາສະມາຊິກຫ້ອງໃຫ້ຂຽນເປັນລາຍການລົງມາທີ່ຢູ່ໃຕ້ຫົວຂໍ້ໃຫຍ່ເບື້ອງຊ້າຍ: ຄວາມຮຽກຮ້ອງຂອງພຣະເຢຊູໃຫ້ມີການປ່ຽນແປງຊີວິດໃນການເປັນສິດ. (ເຊັ່ນຕົວຢ່າງ: ຮັກພຣະເຢຊູແລະພາຣະກິດການປະກາດຂອງພຣະອົງຫລາຍກວ່າຄອບຄົວ ແລະຊີວິດຂອງຕົນເອງ; ຕິດຕາມເປົ້າຫມາຍຂອງພຣະອົງ, ຄວາມຕັ້ງໃຈຂອງພຣະອົງ, ແຜນການຂອງພຣະອົງ, ແລະທິດທາງການໃຊ້ຊີວິດ; ມີຄວາມສັດທາແລະອຸທິດຕົນໃຫ້ພຣະອົງ; ສລະສິດຂອງຕົນ; ສມັກໃຈຍອມຮັບຄວາມທຸກລໍາບາກ ແລະສລະທຸກສິ່ງທຸກຢ່າງ; ຕຶກຕອງຊັ່ງຊາຜົນໄດ້ແລະຜົນເສັຽ; ຍືນຍັດດ້ວຍຄວາມຈິງໃຈໃນການຍອມຮັບຈົນຫມົດ).

## ຫມູນໃຊ້ໃນການກະທໍາ

7. ອ້າງອີງຕາມຫົວຂໍ້ໃຫຍ່ເບື້ອງຂວາຂຽນວ່າ: ຄວາມສມັກໃຈຈະເຂົ້າມາເປັນສິດຂອງພຣະເຢຊູຢູ່ໃນຣະດັບໃດ. ເຊື້ອເຊີນໃຫ້ສະມາຊິກຫ້ອງອອກຄວາມຄິດເຫັນວ່າ ພວກເຂົາມີຄວາມສມັກໃຈຫລາຍປານໃດທີ່ຈະເປັນສິດຂອງພຣະເຢຊູ. (ຫມູນໃຈຜູ້ທີ່ບໍ່ປາກບໍ່ເວົ້ານໍາຫມູ່ ໃຫ້ພວກເຂົາຂຽນໃສ່ເຈັ້ຽໄວ້ສໍາລັບຕົວເຂົາເອງ). ໃຫ້ເວລາສົນທະນາ.

8. ນໍາພາສະມາຊິກຫ້ອງໃຫ້ຮ້ອງເພງ " ຂ້ານອບທຸກສິ່ງແກ່ພຣະເຢຊູ" ແລະອະທິຖານປິດຫ້ອງຮຽນ.

## <u>ຄຳແນະນຳສຳລັບຄຣູສອນ</u>
## <u>ບົດຮຽນບົດທີ 8</u>
## <u>ຄຳອຸປມາເຣື່ອງເງິນທີ່ເສັຽ ແລະເຣື່ອງລູກທີ່ເສັຽ</u>
## <u>ແລະຄວາມຊົມຊື່ນຍິນດີທີ່ໄດ້ພົບສິ່ງທີ່ເສັຽໄປ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ລູກາ 15:8-32

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ລູກາ 15: 1-32

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ເວລາພວກເຮົາໄດ້ເຫັນພຣະຄຸນຂອງພຣະເຈົ້າໃນຊີວິດຂອງເຮົາ, ພວກເຮົາຈິ່ງເກີດມີຈິດໃຈທີ່ຊົມຊື່ນຍິນດີກັບພຣະເຈົ້າເມື່ອພຣະອົງໄດ້ຮັບເອົາຄົນທີ່ຫລົງໄປກັບຄືນ ບໍ່ວ່າຄົນເຫລົ່ານັ້ນຈະເປັນໃຜ ຫລືໄດ້ເຮັດສິ່ງໃດມາກ່ອນ.

**<u>ຄຳຖາມເພື່ອການສຳຣວດ:</u>** ທ່ານຊົມຊື່ນຍິນດີກັບພຣະເຈົ້າບໍ່ເວລາເຫັນພຣະອົງຕ້ອນຮັບຄົນທີ່ໄດ້ຫລົງທາງໄປຄືນຫາພຣະອົງ? ຖ້າບໍ່, ເປັນຫຍັງຈິ່ງບໍ່ຍິນດີ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຮັບເອົາພຣະຄຸນເຂົ້າມາໃນຊີວິດ ແລະເພື່ອຫາວິທີທີ່ຈະແບ່ງປັນຄວາມຍິນດີໃຫ້ກັບຄົນອື່ນໆ.

### <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຕິດຮູບໝາ ຫລືຮູບແມວໃສ່ກະດານ ແລ້ວຖາມວ່າ: <u>ມີໃຜໃນພວກເຮົາເຄີຍເສັຽສັດບໍ່?</u> ໃຫ້ເວລາຕອບ. ຖາມ: <u>ທ່ານເຮັດແນວໃດຈິ່ງ ໄດ້ສັດນັ້ນຄືນ?</u> ຕິດຮູບກະເປົາເງິນ, ໃບເຄຣດິດ, ຫລືກຸນແຈໃສ່ກະດານ. ຖາມ: <u>ມີໃຜເຄີຍເສັຽສິ່ງຂອງເຫລົ່ານີ້ແດ່?</u> ໃຫ້ເວລາຕອບ. ຕິດຮູບເດັກນ້ອຍໃສ່ກະດານ ແລ້ວຖາມວ່າ: <u>ມີໃຜແດ່ເຄີຍໄປຕລາດແລ້ວເຮັດລູກ ເສັຽ ຫລືເຄີຍເຫັນລູກຄົນອື່ນຫລົງ?</u> ໃຫ້ເວລາຕອບ. ຖາມ:<u>ຖ້າສິ່ງເຫລົ່ານີ້ເຄີຍເກີດຂຶ້ນກັບທ່ານ, ທ່ານມີຄວາມຮູ້ສຶກ ແນວໃດເມື່ອໄດ້ພົບຄືນ ຫລືສິ່ງຂອງທີ່ເສັຽໄປ?</u>

2. ບອກນັກຮຽນວ່າ ຈາກການສຶກສາພຣະທັມລູກາ 15, ພວກເຮົາຈະໄດ້ຮຽນຮູ້ເຖິງຄວາມຮູ້ສຶກຂອງຜູ້ທີ່ໄດ້ພົບຂອງທີ່ເສັຽໄປ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ໃຫ້ນັກຮຽນຜູ້ນຶ່ງອ່ານ ລູກາ 15:1-7; ອີກຜູ້ນຶ່ງໃຫ້ອ່ານ<u>ເບື້ອງຫລັງຂອງຄຳອຸປມາ</u>ຊຶ່ງມີຢູ່ໃນບົດຮຽນ.

4. ໃຫ້ນັກຮຽນຜູ້ນຶ່ງອ່ານລູກາ 15:4-10. ກ່ອນການອ່ານ ເຕືອນທຸກຄົນໃຫ້ຟັງດີໆວ່າເປັນຫຍັງໂຕແກະຈິ່ງເສັຽ ແລະແມ່ນຫຍັງເກີດຂຶ້ນກັບເງິນຫລຽນ. ຫລັງຈາກອ່ານຈົບແລ້ວໃຫ້ນັກຮຽນຕອບ. (ແກະເສັຽເພາະມັນໜີອອກທາງ, ແລະເງິນຫລຽນເສັຽເພາະຂາດຄວາມຣະວັງ) ຖາມ: <u>ຄົນລ້ຽງແກະ, ຜູ້ຍິງແລະເພື່ອນບ້ານພາກັນເຮັດຫຍັງເວລາເຂົາເຈົ້າໄດ້ພົບສິ່ງທີ່ເສັຽໄປ?,</u>

5. ແບ່ງນັກຮຽນອອກເປັນສາມທີມເພື່ອຈະຟັງພຣະທັມພາກຕໍ່ໄປ: ທີມ 1--ລູກຜູ້ນ້ອງ; ທີມ 2--ຜູ້ເປັນພໍ່; ທີມ 3

-- ລູກກົກ. ໃຫ້ນັກຮຽນອີກຄົນນຶ່ງອ່ານ ລູກາ 15: 11-32 ໃນຂະນະທີ່ທີມຕ່າງໆກຳລັງຕັ້ງໃຈຟັງເພື່ອຫາຄຳຕອບ. ຕຽມຄຳຖາມເພື່ອການສົນທະນາ (ຢູ່ຂ້າງລຸ່ມນີ້) ໃສ່ເຈ້ຍໄວ້ໃຫ້ແຕ່ລະທີມ. ບອກໃຫ້ແຕ່ລະທີມຈົ່ງຕຽມພ້ອມທີ່ຈະໃຫ້ຄຳຕອບກັບທຸກຄົນຫລັງຈາກການອ່ານພຣະທັມສິ້ນສຸດລົງ. (ໃຫ້ເວລາທີມເພື່ອສົນທະນາ)

<u>ທີມ 1--ລູກຜູ້ນ້ອງ</u>

ກ. ທ່ານຄິດວ່າເປັນຫຍັງລູກຜູ້ນ້ອງຈຶ່ງຢາກໜີຈາກບ້ານ?

ຂ. ລາວໜີໄປໃສ? ທ່ານຄິດວ່າບ່ອນນັ້ນເປັນທີ່ງາມ ຫລືເມືອງອີກບ່ອນນຶ່ງບໍ່? ເປັນຫຍັງ?

ຄ. ລາວໄປເຮັດຫຍັງຢູ່ທີ່ນັ້ນ? ເບິ່ງລູກາ 15:30. ລູກກົກຮູ້ເຣື່ອງໄດ້ແນວໃດ?

ງ. ການທີ່ລູກຜູ້ນ້ອງໄດ້ໄປຮັບຈ້າງລ້ຽງໝູນັ້ນ ມີຄວາມໝາຍແນວໃດ?

ຈ. ເວລາລາວຄິດຈະກັບບ້ານ, ລາວຄິດວ່າຈະໄດ້ຮັບການຕ້ອນຮັບແບບໃດຈາກພວກຂ້ອຍໃຊ້, ຈາກອ້າຍ, ແລະຈາກພໍ່?

ສ. ເປັນຫຍັງລາວຈຶ່ງຮູ້ເມື່ອຄືງ?

ຊ. ລາວຕຽມພ້ອມທີ່ຈະຮັບຕຳແໜ່ງຫຍັງໃນຄອບຄົວຂອງພໍ່ລາວ?

<u>ທີມ 2-- ຜູ້ເປັນພໍ່</u>

ກ. ຜູ້ເປັນພໍ່ມີຕຳແໜ່ງຫຍັງໃນຊີວິດ?

ຂ. ເວລາທ່ານຍັງເປັນເຍົາວະຊົນ, ພໍ່ຂອງທ່ານໄດ້ປ່ອຍໃຫ້ອອກບ້ານເໝືອນກັບພໍ່ຄົນນີ້ບໍ່? ເປັນຫຍັງບໍ່ໃຫ້ໄປ? ຫລື ເປັນຫຍັງຈຶ່ງໃຫ້ໄປ?

ຄ. ທ່ານຄິດວ່າເປັນຫຍັງພໍ່ຄົນນີ້ຈຶ່ງເຮັດຕາມທີ່ລູກຮ້ອງຂໍ?

ງ. ທ່ານຄິດວ່າຜູ້ເປັນພໍ່ຮູ້ສຶກແນວໃດເວລາລູກໜີຈາກບ້ານ?

ຈ. ເປັນຫຍັງພໍ່ຈຶ່ງບໍ່ອອກໄປຕິດຕາມຫາລູກຊາຍ?

ສ. ພໍ່ມີຄວາມຮູ້ສຶກແນວໃດເວລາລູກກັບບ້ານ?

ຊ. ເບິ່ງຄວາມແຕກຕ່າງຂອງການເຮັດກັບລູກກົກ ແລະລູກຜູ້ນ້ອງຂອງພໍ່ຜູ້ນີ້.

<u>ທີມ 3-- ລູກກົກ</u>

ກ. ທ່ານຄິດວ່າເປັນຫຍັງລູກກົກຈຶ່ງເປັນຄົນສຸດທ້າຍທີ່ຮູ້ເຣື່ອງການກັບບ້ານຂອງນ້ອງຊາຍ?

ຂ. ລາວມີຄວາມຮູ້ສຶກແນວໃດເມື່ອຮູ້ວ່າມີການກິນລ້ຽງຕ້ອນຮັບນ້ອງຊາຍ?

ຄ. ລາວຖືວ່າຕົນເອງມີຖານະແນວໃດໃນຄອບຄົວຂອງພໍ່? (ເບິ່ງ 15:29)

ງ. ຄວາມສັມພັນຣະຫວ່າງພໍ່ແລະລູກໄດ້ສະແດງໃຫ້ເຫັນແນວໃດແດ່ກ່ຽວກັບ ພຣະຄຸນ ແລະການປະກອບການດີ?

ຈ. ໃຜເປັນຜູ້ຕັດສິນໃຈວ່າຈະໃຫ້ລູກກົກເຂົ້າຮ່ວມໃນງານລ້ຽງຫລືບໍ່?

6. ໃຫ້ເວລາແຕ່ລະທີມເພື່ອຕອບຄຳຖາມ.

## <u>ນຳບົດຮຽນໄປໃຊ້ກັບຊີວິດ (ໃຊ້ເວລາ 15 ນາທີ)</u>

7. ສລູບບົດຮຽນໂດຍການສະແດງຄວາມເຫັນຕາມສົມຄວນ.

8. ປິດການຮຽນດ້ວຍການອະທິຖານຂໍການນຳພາເພື່ອພວກເຮົາຈະໄດ້ສະແດງພຣະຄຸນຂອງພຣະເຈົ້າກັບທຸກໆຄົນໂດຍບໍ່ເລືອກຊັ້ນວັນນະ ແລະເຜົ່າພັນ.

## <u>ຄຳແນະນຳສຳລັບຄູ</u>
## <u>ບົດຮຽນບົດທີ 9</u>
## <u>ພະນັກງານບໍ່ສັດຊື່: ໃຊ້ຊັບເພື່ອຈຸດປະສົງອັນຍິ່ງໃຫຍ່</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ລູກາ 16:1-13

**<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u>** ລູກາ 16:1-15

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຄຣິສຕຽນສົມຄວນໃຊ້ເງິນແລະຊັບສິນຢ່າງສລຽວສລາດ ເພື່ອຈະໄດ້ມີສ່ວນໃນວຽກງານທີ່ຈະໝັ້ນຄົງຊົ່ວນິຣັນ.

**<u>ຄຳຖາມເພື່ອການສຳຣວດ:</u>** ການຈ່າຍເງິນແລະໃຊ້ຊັບສົມບັດຂອງທ່ານມີຄວາມສຳພັນຫຍັງແດ່ກັບຊີວິດນິຣັນ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ອະທິບາຍວິທີໃຊ້ເງິນແລະຊັບສິນແບບສລຽວສລາດ ເພື່ອຈະໄດ້ມີສ່ວນໃນວຽກງານທີ່ຈະໝັ້ນຄົງຢູ່ຊົ່ວນິຣັນ.

### <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ໃຫ້ຕຽມຄຳຖາມຕໍ່ໄປນີ້ໄວ້ລ່ວງໜ້າ. ຢາຍໃຫ້ນັກຮຽນແຕ່ລະຄົນເວລາເຂົາເຈົ້າມາເຖິງຫ້ອງຮຽນ. ບອກໃຫ້ແຕ່ລະຄົນຕອບຄຳຖາມໂດຍບໍ່ໃຊ້ພຣະຄັມພີ ຫລືບົດຮຽນສຳລັບມື້ນີ້. ຕອບຄຳຖາມແລ້ວໃຫ້ຮັກສາເຈັ້ຽໄວ້.

### <u>ຄຳຖາມກ່ອນການຮຽນ ເຣື່ອງ</u>
### <u>ພນັກງານບໍ່ສັດຊື່ໃຊ້ຊັບສົມບັດເພື່ອຈຸດປະສົງອັນຍິ່ງໃຫຍ່</u>

(ຂີດວົງອ້ອມຄຳວ່າ <u>ຖືກ</u> ຖ້າທ່ານຄິດວ່າຄຳຕອບນັ້ນຖືກ, ຂີດອ້ອມ <u>ຜິດ</u> ຖ້າທ່ານຄິດວ່າມັນຜິດ)

ຖືກ ຜິດ (1) ພຣະເຢຊູເລົ່າຄຳອຸປມາກັບພວກສາວົກ, ແຕ່ພວກຟາຣີຊາຍກໍໄດ້ຍິນດ້ວຍ.

ຖືກ ຜິດ (2) ພວກຟາຣີຊາຍເຊື່ອວ່າພຣະເຈົ້າຊົງໃຫ້ພຣະພອນແກ່ຄົນຊອບທັມສເມີ.

ຖືກ ຜິດ (3) ເວລາຖືກກ່າວຫາວ່າເຮັດຜິດ, ພະນັກງານໄດ້ຂໍຄວາມເມດຕາ.

ຖືກ ຜິດ (4) ພນັກງານເອີ້ນລູກໜີ້ຂອງນາຍມາທຸກຄົນ ແລ້ວເພີ້ມຈຳນວນໜີ້.

ຖືກ ຜິດ (5) ການປະພຶດຂອງພະນັກງານເຮັດໃຫ້ລູກໜີ້ຊັງລາວ.

ຖືກ ຜິດ (6) ນາຍຈ້າງຕຳໜິການປະພຶດຂອງພະນັກງານ.

ຖືກ ຜິດ (7) ພຣະເຢຊູຍ້ອງຍໍການປະພຶດຂອງພະນັກງານ, ແຕ່ບໍ່ໄດ້ຍ້ອງການຜິດສິນທັມຂອງເຂົາ.

ຖືກ ຜິດ (8) ພຣະເຢຊູສອນສາວົກໃຫ້ສ້າງໝູ່ດ້ວຍການໃຊ້ "ຊັບສົມບັດໃນໂລກ" ແບບເໝາະສົມ.

ຖືກ ຜິດ (9) ຈຸດຄຳສອນໃນຄຳອຸປມານີ້ແມ່ນພຣະເຢຊູຊົງສອນພວກສາວົກໃຫ້ໃຊ້ຊັບສົມບັດແລະໂອກາດໃນໂລກນີ້ເພື່ອພັນທະກິດຂອງພຣະເຈົ້າ, ບໍ່ແມ່ນເພື່ອປະໂຍດໃນໂລກມະນຸດ.

ຖືກ ຜິດ (10) ພວກຟາຣີຊາຍເຍາະເຍີ້ຍຄຳອຸປມານີ້ເພາະເສດຖີໃນເຣື່ອງນີ້ເປັນຄົນຕ່າງຊາດ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

2. ໃຫ້ເວລານັກຮຽນເພື່ອຕອບຄຳຖາມ. ແລ້ວຖາມຄວາມເຫັນສຳລັບຄຳຕອບແຕ່ລະຂໍ້. ໃຊ້ຄຳຕອບຕໍ່ລົງໄປນີ້ແລະບົດຮຽນເພື່ອເປັນການເພີ້ມເຕີມຄຳຕອບຂອງນັກຮຽນ. ຄຳຕອບສຳລັບຄຳຖາມທີ່ຜ່ານມາຄື:

(1) ຖືກ. ອ່ານລູກາ 16:1, 14.

(2) ຖືກ. ອ່ານ ພຣະບັນຍັດທີສອງ 28:1-2, 8.

(3) ຜິດ. ລາວບໍ່ໄດ້ໂທດພຣະເຈົ້າ, ລາວບໍ່ໄດ້ມີຄວາມຂົມຂື່ນ, ລາວບໍ່ໄດ້ຊອກຄວາມເຫັນໃຈ, ລາວບໍ່ໄດ້ຂໍຄວາມເມດຕາ. ລາວວາງແຜນເພື່ອອະນາຄົດ.

(4) ຜິດ. ລາວຜ່ອນຈຳນວນໜີ້ລົງ.

(5) ຜິດ. ເບິ່ງ 16:4, 9. ລາວສ້າງມິດກັບລູກໜີ້.

(6) ຜິດ. ເບິ່ງ 16:8. ນາຍຍ້ອງຍໍພນັກງານໃນຄວາມສລາດຂອງເຂົາ, ແຕ່ບໍ່ໄດ້ຍ້ອງຄວາມບໍ່ສັດຊື່.

(7) ຖືກ. ປຽບທຽບພະນັກງານຊຶ່ງເປັນຄົນ "ໃນໂລກນີ້" ແລະໄດ້ປະພຶດຕາມສມັຍ ໃສ່ກັບຜູ້ຢູ່ "ໃນຄວາມສວ່າງ," ຊຶ່ງຈະເບິ່ງໄປໄກກວ່າປັດຈຸບັນ.

(8) ຖືກ. ເບິ່ງ 16:9.

(9) ຖືກ. ອະທິບາຍ "ຊັບສິນບັດອັນບໍ່ຍຸດຕິທັມ" (16:11).

(10) ຜິດ. ເບິ່ງ 16: 14. ພວກເຂົາເຍາະເຍີ້ຍພຣະເຢຊູເພາະພວກເຂົາມັກເງິນ. ອ່ານ 1 ຕມທ 6:10.

3. ໃຫ້ນັກຮຽນຜູ້ນຶ່ງອ່ານ 16:10-12. ຖາມ: ຫລັກຄຳສອນໃນຂໍ້ 10 ຈະນຳມາໃຊ້ໃນປັດຈຸບັນໄດ້ວິທີໃດ? ຖາມ: ພຣະເຢຊູຄຣິດຂຍາຍຫລັກຄຳສອນນີ້ຕໍ່ໄປເຖິງເຣື່ອງນິຣັນດອນດ້ວຍວິທີໃດ?

4. ອ່ານ 16:13. ຖາມ: ຄົນທີ່ເຮັດການສອງບ່ອນໃນສມັຍນີ້ແຕກຕ່າງກັບພວກຂ້ອຍໃຊ້ ແລະທາດໃນສມັຍຂອງພຣະເຢຊູແນວໃດ? (ຂ້ອຍໃຊ້ແລະທາດເປັນສິນບັດຂອງນາຍຈ້າງ ແລະຈະບໍ່ມີເວລາຫວ່າງ. ການຮັບໃຊ້ພຣະເຈົ້າກໍເຊັ່ນດຽວກັນ--ເປັນວຽກເຕັມເວລາ)

## ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

5. ພານັກຮຽນສຶກສາເບິ່ງ "ຄຳສອນສຳລັບຊີວິດ" ໃນບົດຮຽນໂດຍລະອຽດ. ໃຫ້ເວລາສະແດງຄວາມເຫັນວ່າຈະນຳໄປໃຊ້ໃນຊີວິດແນວໃດ?

6. ເລົ່າເຣື່ອງ: ໃນປີ 2003, ໄຟໄດ້ໄໝ້ປ່າຢູ່ທາງພາກໃຕ້ຂອງຣັຖຄາລີຟໍເນັຽ. ນັກດັບເພີງໄດ້ພາກັນເຕືອນພວກເຈົ້າຂອງບ້ານໃຫ້ອອກໜີຈາກເຮືອນໄປຢູ່ທີ່ປອດພັຍ. ຫລາຍຄົນຕອບພວກດັບເພີງວ່າ, "ທຸກຢ່າງໃນຊີວິດຢູ່ໃນບ້ານຫລັງນີ້." ຖາມ: ທ່ານໄດ້ລົງທຶນທຸກຢ່າງໄວ້ກັບບ້ານ, ສິ່ງຂອງ, ຫລືຄອບຄົວບໍ່?

7. ຊັກຊວນນັກຮຽນໃຫ້ຄຶດເບິ່ງຄຳຖາມສອງຂໍ້ຕໍ່ໄປນີ້:

- ມີຈັກເທື່ອທີ່ຂ້ອຍຄຶດວ່າເງິນທອງ, ສິ່ງຂອງ, ແລະໂອກາດເປັນຂອງຂ້ອຍ ແທນທີ່ຈະຄຶດວ່າເປັນຂອງຮັບຝາກຈາກພຣະເຈົ້າ?
- ຂ້ອຍຈະໃຊ້ຊັບສິນບັດແບບສລາດຂຶ້ນກວ່າເກົ່າໄດ້ຢ່າງໃດ ເພື່ອຂ້ອຍຈະມີໂອກາດໄດ້ໃຊ້ສິ່ງເຫລົ່ານີ້ເພື່ອວຽກທີ່ຈະຢູ່ຊົ່ວນິຣັນ?

8. ອະທິຖານປິດໂດຍຂໍໃຫ້ພຣະເຈົ້າຊ່ວຍໃຫ້ເຂົ້າໃຈວ່າເງິນທອງ, ສິ່ງຂອງ, ແລະໂອກາດທີ່ພວກເຮົາມີເປັນພຽງຂອງຮັບຝາກຈາກພຣະເຈົ້າ.

## <u>ຄຳແນະນຳສຳລັບຄຣູສອນ</u>

## <u>ບົດຮຽນບົດທີ 10</u>

## <u>ລາຊະໂຣ ແລະພວກອ້າຍນ້ອງທີ່ກຄົນ: ຊ່ວຍເຫລືອຜູ້ທີ່ມີຄວາມຕ້ອງການ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ລູກາ 16:19-31

**<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u>** ລູກາ 16:19-31

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການບໍ່ຍອມຊ່ວຍເຫລືອບຸກຄົນທີ່ກຳລັງມີຄວາມຕ້ອງການ ຈະຖືກການພິພາກສາຂອງພຣະເຈົ້າ

**<u>ຄຳຖາມເພື່ອການສຳຣວດ:</u>** ການຊ່ວຍເຫລືອຄົນທີ່ກຳລັງມີຄວາມຕ້ອງການມີຄວາມສຳຄັນບໍ່, ຊ່ວຍຫລືບໍ່ຊ່ວຍກໍໄດ້ບໍ່, ຫລືຈຳເປັນຕ້ອງຊ່ວຍບໍ່?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອສຳຣວດເບິ່ງຊີວິດຂອງຂ້າພະເຈົ້າເອງ ເມື່ອເບິ່ງການປະພຶດຂອງເສດຖີຄົນນີ້.

## <u>ແຜນສຳລັບຄຣູສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຖາມ: ມີໃຜແດ່ ເຄີຍເປັນເໝືອນລາຊະໂຣ? ຫລືມີໃຜແດ່ທີ່ຮູ້ຄົນທີ່ຍາກຈົນເໝືອນລາຊະໂຣ? ໃຫ້ເວລາແບ່ງປັນ.

2. ເບິ່ງ "ຄຳຖາມເພື່ອການສຳຣວດ" ໃນບົດຮຽນ ແລະຊັກຊວນສົນທະນາ. ບອກທຸກຄົນວ່າການສຶກສາເຣື່ອງເສດຖີແລະລາຊະໂຣໃນມື້ນີ້ຈະຊ່ວຍພວກເຮົາໃຫ້ເບິ່ງຊີວິດຂອງຕົວເອງເມື່ອປຽບທຽບໃສ່ກັບຄຳສອນຂອງພຣະເຢຊູໃນເຣື່ອງສິ່ງສຳຄັນ, ສິ່ງທີ່ເລືອກໄດ້, ຫລືສິ່ງທີ່ຈຳເປັນ.

3. ໃຫ້ຜູ້ນຶ່ງອ່ານ "ຈຸດປະສົງຂອງບົດຮຽນນີ້." ຊັກຊວນໃຫ້ນັກຮຽນແຕ່ລະຄົນສຳຣວດເບິ່ງຊີວິດວ່າພວກເຂົາເຈົ້າມີທ່າທີເໝືອນກັບເສດຖີຄົນນີ້ບໍ່.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

4. ເບິ່ງຫົວຂໍ້ບົດຮຽນທີ່ວ່າ "ການບູຊາຊັບສົມບັດ." ຖາມ: ຄວາມເວົ້ານີ້ມີຄວາມໝາຍແນວໃດ? ໃຫ້ເວລາຕອບ. ໃຊ້ບົດຮຽນເພື່ອຊ່ວຍບັລຍາຍ. ເວົ້າເຖິງວ່າການບູຊາຊັບສົມບັດສາມາດນຳຄົນໃຫ້ກາຍເປັນຜູ້ຍາກຈົນຝ່າຍຈິດວິນຍານໄດ້.

5. ໃຫ້ຜູ້ນຶ່ງອ່ານ ລູກາ 16:19-21. ໃຊ້ຂໍ້ 14 ເປັນຈຸດສົນທະນາ ແລະໃຊ້ຄຳຖາມຕໍ່ໄປນີ້:
   - ທ່ານຈະບັລຍາຍເຖິງຮູບຊົງແລະອຸປນິສັຍຂອງເສດຖີວ່າແນວໃດແດ່?
   - ທ່ານຄິດວ່າຄົນອື່ນໆຈະຄິດແນວໃດໃນຕົວເຂົາ?
   - ພວກນັກທັມເບິ່ງຄວາມຮັ່ງມີໄປໃນທຳນອງໃດ?
   - ພວກເຮົາເຄີຍມີທ່າທີເໝືອນກັບເສດຖີຄົນນີ້ບໍ່?
   - ແບບໃດ?

- ທ່ານຈະບັລຍາຍເຖິງຮູບຊົງແລະຄຳອ້ອນວອນຂອງລາຊະໂຣແນວໃດແດ່?
- ທ່ານຄິດວ່າຄົນອື່ນໆຄິດແນວໃດກັບລາຊະໂຣ?
- ພວກນັກທັມເບິ່ງຄວາມຍາກຈົນໄປໃນທຳນອງໃດ?

6. ເບິ່ງຫົວຂໍ້ "ຄວາມຕາຍຄືຈຸດນັດພົບ." ອ່ານ ລູກາ 1:22-26. ເວົ້າເຣື່ອງ "ແດນມໍຣະນາ" ວ່າມີລັກສະນະແນວໃດ? ເປັນບ່ອນຢູ່ສຳລັບຄົນພວກໃດ? ຄວາມຕາຍຈະມາເຖິງທຸກຄົນ. ຖາມ: ທຸກຄົນມີຄວາມສເມີພາບບໍ່ຫລັງຈາກຄວາມຕາຍ? ໃຊ້ບົດຮຽນເພື່ອຊ່ວຍໃນການສົນທະນາ. ຖ້າພວກເຮົາພາກັນວາງຕົວເໝືອນກັບເສດຖີຄົນນີ້, ພວກເຮົາອາດຈະບໍ່ມີໂອກາດໄດ້ຮູ້ຄວາມຈິງຂອງພຣະທັມມັດທາຍ 23:11. ໃຫ້ຄົນນຶ່ງອ່ານ.

7. ອ່ານຫົວຂໍ້ "ຄວາມຈິງໄດ້ຖືກເປີດເຜີຍແລ້ວ." ໃຫ້ຜູ້ນຶ່ງອ່ານ 16:27-32. ຖາມ: ຄົນທີ່ຄືນມາຈາກຄວາມຕາຍຈະສາມາດຊ່ວຍຄົນໃນສມັຍນີ້ໃຫ້ເຊື່ອພຣະເຢຊູບໍ່? ພຣະເຈົ້າໄດ້ຊົງເປີດເຜີຍພຣະອົງດ້ວຍວິທີໃດໃນທຸກມື້ນີ້?

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ເຕືອນທຸກຄົນວ່າ ພຣະເຈົ້າຊົງຮັກທຸກໆຄົນ ແລະບົດຮຽນມື້ນີ້ເອີ້ນໃຫ້ຄຣິສຕຽນທຸກຄົນມີສ່ວນໃນການຊ່ວຍເຫລືອຜູ້ທີ່ຍາກຈົນ.

9. ຖ້າມີນັກຮຽນຜູ້ນຶ່ງຜູ້ໃດເຄີຍມີປະສົບການເຣື່ອງຊ່ວຍຄົນຍາກຈົນ ໃຫ້ໂອກາດເຂົາເຈົ້າເວົ້າເຣື່ອງການຮັບໃຊ້ ແລະພຣະພອນໃນຊີວິດ. ແນະນຳວິທີໃນການທີ່ຈະມີສ່ວນໃນວຽກງານປະເພດນີ້. ທ່ານອາດຈະໃຊ້ປະສົບການຂອງທ່ານເອງເພື່ອເປັນຕົວຢ່າງໃຫ້ນັກຮຽນ.

10. ນຳພາການຕອບຄຳຖາມໃນພາກສຸດທ້າຍຂອງບົດຮຽນ. ໃຫ້ເວລາເພື່ອຄິດພິຈາຣະນາ ແລະແບ່ງປັນ. ປິດການຮຽນດ້ວຍການອ່ານພຣະທັມມັດທາຍ 25:44-45.

## ບົດແນະນຳຄູສອນ
## ບົດຮຽນບົດທີ 11
## ຂ້າໃຊ້ກັບເຈົ້ານາຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 17:7-10
**ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:** ລູກາ 17:1-10
**ຈຸດສຳຄັນຂອງບົດຮຽນນີ້:** ການເຊື່ອຟັງພຣະເຈົ້າເປັນໝາກຜົນຂອງການຮູ້ພຣະຄຸນພຣະອົງ.
**ຄຳຖາມເພື່ອການສຳຣວດ:** ທ່ານຄິດວ່າພຣະເຈົ້າໄດ້ຕິດຄ້າງທ່ານອັນໃດເມື່ອທ່ານປະຕິບັດຕາມຄຳພຣະອົງ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຄົ້ນໃນຄຳອຸປະມາກ່ຽວກັບການເຊື່ອຟັງເປັນໜ້າທີ່ຂອງເຮົາ ບໍ່ແມ່ນວ່າເຮົາເຊື່ອຟັງແລ້ວຈະໄດ້ສິ່ງຕອບແທນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ສັ່ງສອນຄົນທັງຫລາຍໃຫ້ກາຍເປັນສາວົກ.

### ແຜນສຳລັບການສອນ

1. **ອະທິບາຍຄຳເວົ້າພາສາກຣີກສີ່ຄຳທີ່ຄວນຮູ້ມີດັ່ງຕໍ່ໄປນີ້;**
   ກ. Diakonos (ໄດອາໂກໂນສ) ແປວ່າ Servant ແປວ່າຂ້ອຍໃຊ້ ຫລືຜູ້ຮັບໃຊ້, ຈາກຄຳວ່າ Servant ຖືກເສີມຂຍາຍໄປເຖິງຄຳວ່າ Deacon ແປວ່າເຖົ້າແກ່ຫລືຜູ້ປົກຄອງຫລືຂ້ອຍໃຊ້, ຜູ້ຮັບໃຊ້ພຣະເຈົ້າ.
   ຂ. Oiketes (ອອຍກີແຕສ) ແປວ່າຄົນໃຊ້ໃນເຮືອນຖືກຮັບຈ້າງເປັນເດືອນຫລືປີ. (ລູກາ 16:3)
   ຄ. Misthios (ມິສຕີອອສ) ແປວ່າ ຄົນຮັບຈ້າງລາຍວັນ (ລູກາ 15:17, 19)
   ງ. Doulos (ດູລອສ) ແປວ່າ ຂ້າທາດ ຫລືຂ້ອຍຂ້າບໍ່ໄດ້ຮັບຄ່າຈ້າງ (ລູກາ 17:7-11).

2. **ອະທິບາຍຂ້າໃຊ້ກ່ອນບົດຮຽນວັກທີ 1**

3. **ສອນບົດຮຽນວັກທີ 1 ຂ້ອຍໃຊ້ແລະເຈົ້ານາຍ 17:7**
   ກ. ຂ້ອຍໃຊ້ ຫລືຂ້າໃຊ້ນັ້ນຖືກຂາຍທີ່ທ້ອງຕລາດຕາມສະພາບການຂອງບ້ານເມືອງນັ້ນ.
   ຂ. ມະນຸດທຸກຄົນເປັນຂ້າໃຊ້ຂອງຄວາມຜິດບາບທີ່ຄຸມໂດຍຊາຕານ, ພຣະເຢຊູຊົງໄຖ່ອອກຈາກການເປັນຂ້າທາດຂອງຄວາມຜິດບາບໂດຍພຣະໂລຫິດຂອງພຣະອົງ.
   ຄ. ທຸກຄົນທີ່ເຊື່ອໃນພຣະອົງແມ່ນຜູ້ຖືກຊື້ມາດ້ວຍພຣະໂລຫິດຈຶ່ງກາຍເປັນຂ້າໃຊ້ພຣະອົງດ້ວຍ

ສມັກໃຈ ເພາະຮູ້ຈັກພຣະຄຸນທີ່ຊົງໄຖ່.

ງ. ເຮົາພາກັນມາໂບດເພື່ອມານະມັສການ ແລະຂອບພຣະຄຸນດ້ວຍການຕ່າງໆ, ດ້ວຍເຫດນີ້ການມາໂບດຈຶ່ງເປັນການງ່າຍ, ການຖວາຍກໍເຕັມໃຈ ດ້ວຍເຮົາຮູ້ວ່າເຮົາວ່າເຮົາເປັນໜີ້ພຣະຄຸນ.

ຈ. ຢ່າຄິດວ່າຮັບໃຊ້ພຣະເຈົ້າແລ້ວພຣະອົງຈະໂຜດປະທານສິ່ງທີ່ທູນຂໍ ດ້ວຍວ່າພຣະເຈົ້າບໍ່ໄດ້ຕິດຄ້າງໃນສິ່ງເຮົາເຮັດ, ເຮົາເຮັດເພາະວ່າເຮົາເປັນໜີ້ພຣະອົງ.

4. <u>ບົດຮຽນວັກທີ 2 ຂ້ອຍໃຊ້ເຕັມເວລາ</u> 17:8-9

ກ. ເຮົາບໍ່ສາມາດແບ່ງຊີວິດເປັນສ່ວນເປັນຕອນ ຄືເປັນຄຣິສຕຽນວັນອາທິດ ແລະເປັນຊາວໂລກໃນວັນອື່ນໆ.

ຂ. ທຸກຄັ້ງທີ່ຮັບໃຊ້ຄຣິສຕຽນຈະຕ້ອງເຂົ້າເຝົ້າພຣະເຈົ້າເປັນການສ່ວນຕົວ ຄ້າຍຄືເຂົ້າລາຍງານ.

5. <u>ບົດຮຽນວັກທີ 3 ເປັນຂ້າທາດທີ່ຖ່ອມຕົວ</u> 17:10

ກ. ຢ່າຖືວ່າຕົນເອງສໍາຄັນ "ຖ້າຂ້ອຍບໍ່ເຮັດວຽກນີ້ບໍ່ແລ້ວ" ແຕ່ໃຫ້ເວົ້າວ່າຕົນເອງບໍ່ເປັນຄົນສໍາຄັນແຕ່ພູມໃຈທີ່ພຣະເຈົ້າຊົງໃຊ້.

ຂ. ຈົ່ງເຂົ້າໃຈວ່າງານນີ້ບໍ່ແມ່ນເຮົາເປັນຄົນແຮກແລະຄົນສຸດທ້າຍ ຫາກເຮົາບໍ່ເຮັດພຣະອົງກໍໃຊ້ຜູ້ອື່ນ ແລະທ່ານກໍຈະຂາດພຣະພອນ.

ຄ. ເມື່ອຜູ້ອື່ນຍ້ອງກໍຢ່າດີໃຈຈົນເກີນໄປ ຫລືເມື່ອຖືກຕໍາໜິກໍຢ່ານ້ອຍໃຈ ຈົ່ງເຂົ້າໃຈວ່າເພິ່ນຍ້ອງແລະຕິພຣະເຈົ້າ ເພາະສິ່ງທີ່ເຮົາເຮັດບໍ່ແມ່ນວຽກຂອງເຮົາ.

<u>ຄໍາຖາມ:</u>

ອ່ານຈາກຄໍາຖາມໃນບົດຮຽນ ເປັນການສລູບບົດຮຽນ

# ຄຳແນະນຳຄູສອນ
# ບົດຮຽນບົດທີ 12
# ຍິງໝ້າຍແລະຕຸລາການ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 18:1-8
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ລູກາ 17: 20--18:8
**ຈຸດສຳຄັນຂອງບົດຮຽນນີ້:** ການອ້ອນວອນເປັນກຳລັງໃຈໃນການຕໍ່ສູ້ກັບບັນຫາ
**ຄຳຖາມເພື່ອການສຳຣວດ:** ທ່ານຍັງຈະມີຄວາມເຊື່ອຈົນເຖິງເວລາພຣະຄຣິດກັບຄືນມາບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າການອ້ອນວອນຊ່ອຍໃຫ້ຕັ້ງໝັ້ນຄົງ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດຖືກສ້າງຂື້ນໃນຮູບຮ່າງຄ້າຍຄືພຣະເຈົ້າ
- ເຊື່ອຟັງແລະຮັບໃຊ້ພຣະເຢຊູທາງກາຍ, ຈິດວິນຍານ ແລະຄວາມຄິດ.

## ແຜນສຳລັບການສອນ

ພຣະທັມລູກາເປັນພຣະທັມທີ່ບັນຈຸເຣື່ອງຄຳອຸປະມາຫລາຍກວ່າພຣະຄັມພີທຸກເຫລັ້ມ, ເຣື່ອງຂອງບຸດຫລົງຫາຍ, ເຣື່ອງຊາມາເຣັຽຜູ້ໃຈດີ, ເຣື່ອງແກະຫລົງຫາຍແລະເຣື່ອງອື່ນໆອີກທີ່ເປັນເຣື່ອງໂດ່ງດັງຈົນຄົນທັງຫລາຍຮູ້ໃນເຣື່ອງຄຳອຸປະມາເຫລົ່ານີ້. ສ່ວນຄຳອຸປະມາທີ່ເຮົາກຳລັງຈະເວົ້າກັນໃນມື້ນີ້ນັ້ນເປັນເຣື່ອງທີ່ບໍ່ໂດ່ງດັງເທົ່າໃດ ແຕ່ກໍເປັນເຣື່ອງເລິກລັບຈົນຄຣິສຕຽນຫລາຍຄົນບໍ່ສາມາດເຂົ້າໃຈໄດ້ງ່າຍດາຍ, ດ້ວຍເຫດນີ້ເຮົາຈະຮຽນດ້ວຍກັນໃຫ້ລະອຽດໃນມື້ນີ້:

1. **ບົດຮຽນວັກທີ 1 ຄົນສອງຄົນໃນຄຳອຸປະມາ** 18:2-3

   ກ. ຕຸລາການ ແມ່ນຜູ້ມີອຳນາດສູງສຸດແຕ່ຜູ້ດຽວໃນການຕັດສິນ, ທັມດາຕ້ອງເປັນຄົນສັດຊື່ທ່ຽງທັມເພາະເປັນຄົນຂອງພຣະເຈົ້າ. ອ່ານອົບພະຍົບ 1:16 ແລ້ວຈະເຂົ້າໃຈເພີ້ມ.

   ຂ. ຍິງໝ້າຍ ເປັນຄົນຍາກຈົນ, ບໍ່ມີອຳນາດ, ຄົນບໍ່ສົນໃຈ ແລະຖືກຂົ່ມເຫັງຈາກອຳນາດການປົກຄອງ.

   ຄ. ພຣະເຢຊູຍົກຕົວຢ່າງຕຸລາການບໍ່ດີຍັງໃຈອ່ອນເມື່ອຍິງໝ້າຍມາວອນຢູ່ເລື້ອຍ. ແມ່ນສອນເຮົາໃຫ້ອ້ອນວອນຢູ່ເລື້ອຍໆເໝືອນຍິງໝ້າຍທີ່ບໍ່ມີໃຜສົນໃຈ ຍັງໄດ້ຮັບຄຳຕອບຈາກຕຸລາການຜູ້ນັ້ນ.

2. **ບົດຮຽນວັກທີ 2 ຄຳຕັດສິນຂອງຕຸລາການ** 18:4-5

   ກ. *"ເມື່ອທີ່ຕຸລາການບໍ່ຍອມເຮັດຕາມ "* ສອນເຮົາວ່າຕອນແຮກທີ່ເຮົາອ້ອນວອນນັ້ນຍັງບໍ່ທັນຕອບ.

ຂ. *"ແຕ່ເພາະແມ່ໝ້າຍຄົນນີ້ມາກວນໃຈ "* ໝາຍຄວາມວ່າ ຫາກເຮົາອ້ອນວອນຂໍຢູ່ເລື້ອຍໆ.

ຄ. *"ເຮັດໃຫ້ເຮົາເສັຽກຳລັງໃຈ "* ແມ່ນຄວາມຄິດຂອງຕຸລາການ ມີຄວາມໝາຍວ່າ  ມາຂໍເລື້ອຍໆ ຕຸລາການກໍໃຈອ່ອນ.

ງ. ຕຸລາການທີ່ບໍ່ຢຳເກງພຣະເຈົ້າແລະບໍ່ນັບຖືມະນຸດ ຍັງສົງສານຍິງໝ້າຍ ສ່ວນພຣະເຈົ້າເປັນພຣະເຈົ້າທີ່ມີພຣະທັຍເມຕາ ພຣະອົງຈະຊົງໂຜດຟັງຄຳອະທິຖານອ້ອນວອນຂອງເຮົາ, ຫາກເຮົາວອນຂໍບໍ່ລົດລະ.

**3. ບົດຮຽນວັກທີ 3 ຊົງອະທິບາຍຄຳອຸປະມາ 18:6-8**

ກ. ໄພ່ພົນຂອງພຣະອົງທີ່ຮ້ອງອອກພຣະນາມຂອງພຣະອົງດ້ວຍຄວາມເຊື່ອຈະຊົງຕອບ.

ຂ. ທ່ານອາຈຖືກເມີນເສີຽຈາກຜູ້ມີອຳນາດຝ່າຍໂລກນີ້ ແຕ່ທ່ານຈະບໍ່ຖືກເມີນເສີຽຈາກພຣະເຈົ້າ ຫາກທ່ານເຊື່ອໃນພຣະອົງ ດັ່ງນັ້ນຈົ່ງໄຫວ້ວອນຂໍຢ່າອ່ອນກຳລັງໃຈເລີຽ.

ຄ. ພຣະເຈົ້າອາດຈະຕອບຄຳອະທິຖານຂອງທ່ານແລ້ວກໍບໍ່ຮູ້ເພາະການຕອບຂອງພຣະອົງມີດັ່ງນີ້;

1. ໃຫ້ລໍຖ້າກ່ອນ. Wait
2. ບໍ່.   No.
3. ໃຫ້ທ່ານ  Yes.

**ຄຳຖາມ:**

1: ເປັນຫຍັງພຣະເຢຊູຈຶ່ງເລົ່າເປັນຄຳອຸປະມາເຣື່ອງຕຸລາການແລະຍິງໝ້າຍ?

2. ຄຳອຸປະມານີ້ສອນຫຍັງທ່ານແດ່?

3. ເຮັດແນວໃດເຮົາຈຶ່ງຈະອ້ອນວອນດ້ວຍຄວາມອົດທົນ?

4. ເຮົາຈະເລີ້ມຕົ້ນດ້ວຍການອົດທົນນີ້ມື້ໃດ? ຫລືຈະເວົ້າອີກວ່າຄ່ອຍເປັນຄ່ອຍໄປອີກ?

5. ມີສິ່ງໃດແດ່ທີ່ພຣະເຈົ້າເຮັດບໍ່ໄດ້ນອກຈາກຄວາມບາບແລະຄວາມຊົ່ວ?

# ຄຳແນະນຳຄູສອນ
# ບົດຮຽນບົດທີ່ 13
# ຄົນອ້ອນວອນສອງຄົນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 18:9-14
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ລູກາ 18:9-14
**ຈຸດສຳຄັນຂອງບົດຮຽນນີ້:** ການອ້ອນວອນນັ້ນສຳຄັນໃນສິ່ງທີ່ເຮົາເວົ້າ.
**ຄຳຖາມເພື່ອການສຳຣວດ:** ອັນໃດເປັນເຄື່ອງບອກວ່າເຮົາມີຄວາມສັມພັນທີ່ດີກັບພຣະເຈົ້າ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສຳຣວດຄວາມສຳພັນອັນແທ້ຈິງແມ່ນການຂານຮັບພຣະເຈົ້າດ້ວຍຖ່ອມຕົວ

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດຖືກສ້າງຂື້ນໃນຮູບຮ່າງຄ້າຍຄືພຣະເຈົ້າ
- ເຊື່ອຟັງແລະຮັບໃຊ້ພຣະເຢຊູທາງກາຍ, ຈິດວິນຍານ ແລະຄວາມຄິດ.

## ແບບແຜນສຳລັບການສອນ

1. ທົບທວນບົດຮຽນອາທິດແລ້ວເຣື່ອງໃຫ້ໝັ່ນອ້ອນວອນເໝືອນຍິງໝ້າຍຂໍຮ້ອງຕຸລາການ.

2. ແນະນຳບົດຮຽນວັນນີ້ແມ່ນຕໍ່ຈາກອາທິດແລ້ວໂດຍຄຳອຸປະມາເຣື່ອງ **ຄົນອ້ອນວອນສອງຄົນ**

3. ແບ່ງນັກຮຽນເປັນສອງກຸ່ມດັ່ງນີ້:
   1. ກຸ່ມທີ 1 ອ່ານ ລູກາ 18:10 ແລະຄົ້ນຄວ້າ
      ກ. ສອງຄົນນີ້ມີໃຜແດ່?
      ຂ. ບັນລະຍາຍເຣື່ອງທັງສອງຄົນມີຫລັກສະນະໜ້າທີ່ແຕກຕ່າງກັນຢ່າງໃດ?
   2. ກຸ່ມທີ 2 ອ່ານລູກາ 18:11-14 ແລະຄົ້ນຄວ້າ
      ກ. ຟາຣີຊາຍ ອ້ອນວອນດ້ວຍທ່າທີແນວໃດ? ເພິ່ນເຮັດຫຍັງດີ ແລະບໍ່ດີແດ່?
      ຂ. ຄົນເກັບພາສີ ອ້ອນວອນດ້ວຍທ່ານທີແນວໃດ? ເພິ່ນເຮັດຫຍັງຜິດ ແລະຖືກແດ່?

4. ໃຫ້ນັກຮຽນຄົ້ນຄວ້າປະມານ 5 ນາທີ ແລະບອກໃຫ້ຂຽນໃສ່ກະດາດໃນສິ່ງທີ່ຄົ້ນຄ້ວາ ເພື່ອລາຍງານ.

5. ໃຫ້ກຸ່ມທີ 1 ລາຍງານ ເມື່ອຈົບແລ້ວ ຄຣູເພີ້ມເຕີມຕາມບົດຮຽນວັກທີ 1.

6. ໃຫ້ກຸ່ມທີ 2 ລາຍງານ   ເມື່ອຈົບແລ້ວ ຄຣູເພີ້ມເຕີມຕາມບົດຮຽນວັກທີ່ 2.

ກ. ອາທິບາຍຫລັກການອ້ອນວອນ 3 ຫລື 4 ປະການ ໂດຍຂຽນລົງກະດານທຸກຂັ້ນຕອນ.

ຂ. ຂີດເຄິ່ງກະດານ ປຽບທຽບຄຳອ້ອນວອນທັງສອງຄົນ.

ຄ. ຖາມນັກຮຽນຄຳອ້ອນວອນທັງສອງຄົນນີ້ທ່ານມັກແບບຂອງໃຜ? ເປັນຫຍັງຈຶ່ງມັກແລະບໍ່ມັກ?

7. ອ່ານຄຳຖາມທັງ 5 ຂໍ້ໃນທ້າຍບົດຮຽນເປັນການສລູບບົດຮຽນ.

8. ອ້ອນວອນຂອບພຣະຄຸນທີ່ຊົງສອນເຣື່ອງການອ້ອນວອນ.

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນສຳລັບວັນອີສເຕີ
## ຮູ້ຈັກພຣະເຢຊູຜູ້ຊົງຄືນພຣະຊົນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 24:13-35

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ລູກາ 24:1-53

**ຈຸດສຳຄັນຂອງບົດຮຽນນີ້:** ການຮູ້ຈັກກັບພຣະເຢຊູຜູ້ຊົງຄືນພຣະຊົນໜູນໃຈພວກເຮົາໃຫ້ບອກເຣື່ອງຂອງພຣະອົງໃຫ້ຄົນອື່ນໄດ້ຮູ້.

**ຄຳຖາມເພື່ອການສຳຣວດ:** ເຮັດວິທີໃດພວກເຮົາຈະມີປະສົບການຫລາຍຂື້ນ ເພື່ອຈະແບ່ງປັນຂ່າວປະເສີດເຣື່ອງຂອງພຣະເຢຊູ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຫາວິທີທີ່ຈະໄດ້ປະສົບການ ແລະແບ່ງປັນຂ່າວປະເສີດເຣື່ອງພຣະເຢຊູຜູ້ຊົງຄືນພຣະຊົນ.

### ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ໃຫ້ຜູ້ນຶ່ງອ່ານ "ຈຸດສຳຄັນຂອງບົດຮຽນນີ້." ອະທິບາຍວ່າພວກເຮົາຈະສຶກສາບົດຮຽນສຳລັບວັນອີສເຕີນີ້ຈາກການຂຽນໄວ້ຂອງທ່ານລູກາ. ພວກເຮົາຈະໄດ້ເຫັນບົດບາດຂອງສາວົກສອງຄົນເມື່ອໄດ້ພົບພຣະເຢຊູ ແລະຄວາມຮ້ອນຮົນຂອງພວກເຂົາທີ່ຢາກຈະໄປບອກຄົນອື່ນໆ.

2. ຖາມ: ເຮັດແນວໃດຄຣິສຕະຈັກຈະຕື່ນຕົວເພື່ອການປະກາດ? ໃຫ້ເວລາເພື່ອການສະແດງຄວາມເຫັນ. ຖາມ: ທ່ານຄິດວ່າຄຣິສຕະຈັກຈະຕ້ອງໄດ້ພົບກັບພຣະເຢຊູອີກເທື່ອໃໝ່ບໍ່ກ່ອນທີ່ຈະຕື່ນຕົວ?

3. ຖາມ: ມີໃຜແດ່ທີ່ເຄີຍເຫັນການຕື່ນຕົວຂອງຄຣິສຕະຈັກ? ມີຫຍັງແດ່ເກີດຂື້ນ? ແນະນຳ: ໃນບົດຮຽນນີ້ພວກເຮົາຈະໄດ້ຮຽນຮູ້ເຣື່ອງການຕື່ນຕົວຂອງສາວົກສອງຄົນ; ເຫດເກີດຂື້ນລະຫວ່າງການເດີນທາງແລະການສົນທະນາເຖິງເຣື່ອງທີ່ເກີດຂື້ນໃນອາທິດທີ່ຜ່ານມາ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

4. ໃຫ້ຄົນນຶ່ງອ່ານ ລູກາ 24:13-14. ຖາມ: ພວກເຮົາຮູ້ຫຍັງແດ່ກ່ຽວກັບເຫດການ? ພວກເຂົາເວົ້າເຖິງເຣື່ອງຫຍັງທີ່ເກີດຂື້ນ? ທ່ານຄິດວ່າເຂົາທັງສອງຮູ້ສຶກແນວໃດກັບສິ່ງທີ່ໄດ້ເກີດຂື້ນ? ເບິ່ງ ລູກາ 24:14.

5. ໃຫ້ຄົນນຶ່ງອ່ານ 24:15-27.ຖາມ: ທ່ານຄິດວ່າເປັນຫຍັງພວກເຂົາທັງສອງຈຶ່ງບໍ່ຈື່ໜ້າພຣະເຢຊູ? (ລູກາຄິດວ່າສິ່ງນີ້ ເປັນເຣື່ອງອັສຈັນ) ຖາມ: ພຣະເຢຊູພຍາຍາມສອນພວກເຂົາເຣື່ອງຫຍັງ? ບອກໃຫ້ນັກຮຽນຮູ້ວ່າ ພຣະເຢຊູຄືຜູ້ເຮັດໃຫ້ທຸກຢ່າງໃນພຣະຄັມພີສຳເຣັດ ແລະເປັນຜູ້ເປີດເຜີຍທຸກຢ່າງໃຫ້ຮູ້.

6. ໃຫ້ຜູ້ນຶ່ງອ່ານ 24:28-32. ຖາມ: ພວກເຮົາໄດ້ເຊີນພຣະເຢຊູໃຫ້ເຂົ້າຮ່ວມກັບພວກເຮົາບໍ່? ອະທິບາຍວ່າ ເຖິງພຣະເຢຊູຈະຊົງໄປກ່ອນພວກເຮົາກໍຕາມ, ພຣະອົງຈະລໍຄອຍພວກເຮົາ ເພື່ອເຊີນເຮົາໃຫ້ເຂົ້າຮ່ວມກັບພຣະອົງ. ມີຫລາຍຢ່າງເກີດຂຶ້ນເວລາພວກເຮົາຮ່ວມໂຕະກິນເຂົ້າດ້ວຍກັນ. ຂໍຕົວຢ່າງຈາກພວກນັກຮຽນ.

7. ຖາມ: ເຮັດແນວໃດສາວົກທັງສອງຈຶ່ງຈື່ພຣະເຢຊູ? ພຣະອົງຊົງເປີດເຜີຍພຣະອົງເອງໃຫ້ພວກເຮົາຮູ້ວິທີໃດແດ່?

8. ອ່ານ 24:33-35. ຖາມ: ສາວົກສອງຄົນພາກັນເຮັດຫຍັງຫລັງຈາກໄດ້ພົບພຣະເຢຊູຄຣິດ? (ໄປບອກຄົນອື່ນໆ) ໃຫ້ຄຳເຫັນວ່າ ພວກເຮົາຕື່ນເຕັ້ນຫລາຍເວລາພວກເຮົາພົບພຣະເຢຊູເປັນຄັ້ງທຳອິດ ແລະພວກເຮົາກໍຕ້ອງການທີ່ຈະບອກຄົນອື່ນໆ. ຖາມ: ເຮັດແນວໃດພວກເຮົາຈະໄດ້ຄວາມຕື່ນເຕັ້ນນັ້ນອີກ ເພື່ອພວກເຮົາຈະໄດ້ໄປບອກຄົນອື່ນໆທີ່ພວກເຮົາຮູ້.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

9. ເຊີນຜູ້ນຶ່ງໃຫ້ເລົ່າເຣື່ອງຂອງວັນນຶ່ງຊຶ່ງປ່ຽນແປງຊີວິດຂອງເຂົາ (ນອກຈາກວັນທີ່ໄດ້ຮັບຄວາມລອດພົ້ນ). ຖາມ: ມີຫຍັງແດ່ທີ່ປ່ຽນແປງຫລັງຈາກມື້ນັ້ນ? ເວົ້າ: ແຕ່ລະເຊົ້າຂອງທຸກວັນພວກເຮົາຄວນຈະພົບພຣະເຢຊູກ່ອນຜູ້ອື່ນ ເພື່ອຊີວິດຂອງພວກເຮົາໃນມື້ນັ້ນຈະໄດ້ແຕກຕ່າງກັບວັນທີ່ຜ່ານມາ.

10. ອະທິບາຍ: ພວກເຮົາຄຣິສຕຽນບໍ່ໄດ້ຢູ່ຢ່າງໂດດດ່ຽວ; ພຣະເຢຊູຄຣິດຊົງເປັນຢູ່ ແລະພຣະອົງຊົງຢູ່ນຳພວກເຮົາຕລອດໄປ.

11. ເບິ່ງຄຳຖາມຂໍ້ 5 ໃນພາກສຸດທ້າຍຂອງບົດຮຽນ, "ແມ່ນຫຍັງຄືສິ່ງທີ່ຊ່ວຍຕົວທ່ານເອງໃຫ້ໄດ້ມີປະສົບການກັບຄວາມຈິງວ່າພຣະເຢຊູຍັງຊົງພຣະຊົນຢູ່? ຊັກຊວນໃຫ້ແຕ່ລະຄົນໄດ້ເລົ່າເຣື່ອງນີ້ໃຫ້ຜູ້ໃດຜູ້ນຶ່ງຟັງໃນອາທິດນີ້.